ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

**ບໍລິສັດຫຼັກຊັບ ຫຄຕລ-ກຫ ຈຳກັດ**
**BCEL-KT Securities Company Limited**

**ຄຳຮ້ອງຂໍເປີດບັນຊີຫຼັກຊັບ**
**(ສຳລັບນິຕິບຸກຄົນພາຍໃນ)**

ເລກທີ_____/ຫຄຕລ-ກຫ/ກຕລ

**ປະເພດບັນຊີທີ່ຕ້ອງການເປີດ:**

❑ ບັນຊີຮຸ້ນ ❑ ບັນຊີຮຸ້ນກູ້ ❑ ບັນຊີພັນທະບັດ

**ສະໝັກນຳໃຊ້ຊ່ອງທາງການຊື້-ຂາຍ:**

❑ HTS program ❑ BCEL ONE application

**ຂໍ້ມູນທົ່ວໄປ**:

ຊື່ນິຕິບຸກຄົນ (ພາສາລາວ)_____

(ພາສາອັງກິດ)_____

ປະເທດທີ່ຈົດທະບຽນສ້າງຕັ້ງ_____ທີ່ຕັ້ງຂອງສຳນັກງານ:_____

_____

ໂທລະສັບຕັ້ງໂຕະ:_____ມືຖື: _____ ແຟັກ: _____

**ເອກະສານຕິດຄັດສຳລັບນິຕິບຸກຄົນ**:

❑ ໃບທະບຽນວິສາຫະກິດ ❑ ໃບທະບຽນອາກອນ ❑ ໃບອະນຸຍາດລົງທຶນ

❑ ເອກະສານອື່ນໆ

**ຊື່ ແລະນາມສະກຸນຜູ້ມີສິດລົງລາຍເຊັນເປີດບັນຊີ**:

1._____

2._____

ບຸກຄົນທີ່ສາມາດຕິດຕໍ່ໄດ້ກໍລະນີສຸກເສີນ: ຊື່ ແລະນາມສະກຸນ:_____

ສາຍສຳພັນ:_____ ໂທລະສັບ:_____

**ຂໍ້ມູນບັນຊີທະນາຄານທີ່ເປີດໄວ້ຢູ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ຫຄຕລ)**:

ຊື່ເຈົ້າຂອງບັນຊີເງິນຝາກ: (ຕ້ອງເປັນຊື່ດຽວກັບຊື່ຂອງເຈົ້າຂອງບັນຊີ) _____

ບັນຊີເງິນຝາກເລກທີ:LAK_____USD_____

THB_____CNY_____

**ແບບຢ່າງລາຍເຊັນຂອງຜູ້ມີສິດລົງລາຍເຊັນເປີດບັນຊີ:**

| ແບບຢ່າງລາຍເຊັນ (ເຊັນ 2 ເທື່ອ) | |
|---|---|
| | |
| | |

ຂ້າພະເຈົ້າຂໍຮັບຮອງແລະຢັ້ງຢືນວ່າ ຂໍ້ມູນຂ້າງເທິງນີ້ຄົບຖ້ວນຖືກຕ້ອງຕາມຄວາມເປັນຈິງທຸກຢ່າງ. ຖ້າມີການປ່ຽນແປງຂໍ້ມູນໃດໆ ຈ້າພະເຈົ້າຈະແຈ້ງໃຫ້ທ່ານຊາບຢ່າງເປັນລາຍລັກອັກສອນທັນທີ.

ນະຄອນຫຼວງວຽງຈັນ, ວັນທີ____/____/_____

ລາຍເຊັນພະນັກງານ ການປະທັບຂອງນິຕິບຸກຄົນ ລາຍເຊັນຜູ້ຂໍເປີດບັນຊີ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

***********************************

**ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ**
BCEL KT Securities Co.Ltd

# ສັນຍາແຕ່ງຕັ້ງນາຍໜ້າຊື້-ຂາຍຫຼັກຊັບ
## (ສຳລັບນັກລົງທຶນພາຍໃນ ປະເພດນິຕິບຸກຄົນ)

ເລກທີ_____/ທຄຕລ-ກທ/ກຕລ

❑ ບັນຊີຮຸ້ນ ❑ ບັນຊີຮຸ້ນກູ້ ❑ ບັນຊີພັນທະບັດ

ເລກບັນຊີ: | | | | | | |

ສັນຍາສະບັບນີ້ ໄດ້ຮັບການສ້າງຂຶ້ນໃນວັນທີ ____/____/202___ ທີ່ສຳນັກງານ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ລະຫວ່າງ:

**ຝ່າຍ ກ: ລູກຄ້າ**

ຊື່ນິຕິບຸກຄົນ_____;

ຊື່ຜູ້ອຳນວຍການ:_____ໃບທະບຽນວິສາຫະກິດເລກທີ:_____ອອກໃຫ້ທີ່:_____;

ລົງວັນທີ:_____ໝົດອາຍຸ:_____;ທີ່ຢູ່ປະຈຸບັນ: _____;

ໂທລະສັບຕັ້ງໂຕະ_____ ໂທລະສັບມືຖື: _____ທີ່ຢູ່ອີເມວ ເພື່ອນຳໃຊ້ຕິດຕໍ່ຊື້-ຂາຍຫຼັກຊັບ _____.

ບັນຊີທະນາຄານເລກທີ: LAK_____USD_____

THB_____CNY_____

**ແລະ**

**ຝ່າຍ ຂ: ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ**

ສຳນັກງານໃຫຍ່ຕັ້ງຢູ່: ຊັ້ນ 1 ອາຄານ A1, ຖະໜົນຈົງລ້ຽວ, ເຂດເສດຖະກິດພິເສດບຶງທາດຫຼວງ, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ: (85621) 265477, www.bcel kt.com ,ໃບອະນຸຍາດສ້າງຕັ້ງເລກທີ: 11/ຄຄຊ, ລົງວັນທີ 11 ກັນຍາ 2024;

ຊື່ ແລະ ນາມສະກຸນຜູ້ຕາງໜ້າທີ່ໄດ້ຮັບມອບສິດ: **ທ່ານ ນ. ແສງລາວີ ວົງສາວັນທອງ** ຕຳແໜ່ງ: ຫົວໜ້າພະແນກຊື້-ຂາຍຫຼັກຊັບ ຕາມໃບມອບສິດເລກທີ _____/_____. ລົງວັນທີ_____/____/ 202__.

ທັງສອງຝ່າຍ ໄດ້ຕົກລົງເຊັນສັນຍາຮ່ວມກັນ ໂດຍມີເງື່ອນໄຂດັ່ງລຸ່ມນີ້:

**ມາດຕາ 1: ຈຸດປະສົງຂອງສັນຍາ**

ສັນຍາສະບັບນີ້ສ້າງຂຶ້ນເພື່ອກຳນົດສິດ ແລະ ພັນທະຂອງຄູ່ສັນຍາ, ຫຼັກການ ແລະ ເງື່ອນໄຂໃນການສົ່ງ- ຮັບຄຳສັ່ງຊື້-ຂາຍຫຼັກຊັບ, ການສະສາງ-ຊຳລະລະຫວ່າງຝ່າຍ ກ ແລະ ຝ່າຍ ຂ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດຄຳສັ່ງຊື້-ຂາຍ ໃຫ້ມີປະສິດທິພາບ ແລະ ປົກປ້ອງສິດຜົນປະ�โຫຍດຂອງທັງສອງຝ່າຍ.

**ມາດຕາ 2: ເງື່ອນໄຂຂອງສັນຍາ**

ຝ່າຍ ກ ຕົກລົງແຕ່ງຕັ້ງ ແລະ ມອບສິດ ໃຫ້ຝ່າຍ ຂ ເປັນຕົວແທນ ແລະ ເປັນນາຍໜ້າໃຫ້ແກ່ຝ່າຍ ກ ໃນການຊື້-ຂາຍຫຼັກຊັບ ໂດຍຖືສັນຍາສະບັບນີ້ ເປັນໜັງສືມອບສິດໃຫ້ເຮັດທຸລະກຳຕາມສັນຍາສະບັບນີ້ ແລະ ຝ່າຍ ກ ຕົກລົງຈ່າຍຄ່າບໍລິການໃຫ້ແກ່ຝ່າຍ ຂ ຕາມລະບຽບການ.

ການມອບສິດ ຕາມວັກ 1 ຂອງມາດຕານີ້ ແມ່ນລວມເຖິງການມອບສິດໃຫ້ຝ່າຍ ຂ ເກັບຮັກສາ, ໂອນ, ຮັບໂອນ, ສົ່ງມອບ, ຮັບມອບ, ຖອນ ແລະ ແກ້ໄຂເງິນປັນຜົນ ຫຼື ຜົນປະ�โຫຍດອື່ນໆ ກ່ຽວກັບຫຼັກຊັບໃຫ້ແກ່ຝ່າຍ ຂ. ນອກຈາກນີ້ ການມອບສິດແມ່ນລວມເຖິງການຈອງຊື້ ຫຼື ໃຊ້ສິດໃນຫຼັກຊັບໃດໆ ໃຫ້ກັບຝ່າຍ ກ ຕາມສິດທີ່ຝ່າຍ ກ ມີຢູ່ໃນກໍລະນີທີ່ຝ່າຍ ຂ ພິຈາລະນາແລ້ວເຫັນວ່າເປັນການເຮັດເພື່ອຜົນປະ�โຫຍດຂອງຝ່າຍ ກ; ການຊຳລະຄ່າຊື້ຫຼັກຊັບ, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍອື່ນໆ ກ່ຽວກັບການຊື້-ຂາຍຫຼັກຊັບ. ການທີ່ຝ່າຍ ຂ ເຮັດທຸລະກຳໃດໆ ໃຫ້ແກ່ ຫຼື ແທນຝ່າຍ ກ ຕາມສັນຍາສະບັບນີ້ ຝ່າຍ ກ ຍອມຮັບໃຫ້ມີຜົນເທົ່າກັບເປັນການເຮັດດ້ວຍຕົນເອງ ໂດຍຝ່າຍ ກ ຈະບໍ່ປະຕິເສດຄວາມຮັບຜິດຊອບ ແລະ ຈະບໍ່ໂຕ້ແຍ້ງ ຫຼື ຄັດຄ້ານ.

**ມາດຕາ 3: ຮູບແບບການຊື້-ຂາຍຫຼັກຊັບ**

ການຊື້-ຂາຍຫຼັກຊັບ ມີສອງຮູບແບບຄື: (1) ການຊື້-ຂາຍຫຼັກຊັບທາງກົງ ແລະ (2) ການຊື້-ຂາຍຫຼັກຊັບທາງອ້ອມ.

**ມາດຕາ 4: ການຊື້-ຂາຍຫຼັກຊັບທາງກົງ**

ການຊື້-ຂາຍຫຼັກຊັບທາງກົງ ແມ່ນການຊື້-ຂາຍຫຼັກຊັບ ທີ່ຝ່າຍ ກ ອອກຄຳສັ່ງຊື້-ຂາຍຫຼັກຊັບໃຫ້ແກ່ ຝ່າຍ ຂ ຢ່າງ ເປັນລາຍລັກອັກສອນໂດຍການປະກອບແບບຟອມໃບຄຳສັ່ງຊື້-ຂາຍຕາມການກຳນົດຂອງຝ່າຍ ຂ.

**ມາດຕາ 5: ການຊື້-ຂາຍຫຼັກຊັບທາງອ້ອມ**

ການຊື້-ຂາຍຫຼັກຊັບທາງອ້ອມ ແມ່ນການຊື້-ຂາຍຫຼັກຊັບ ທີ່ຝ່າຍ ກ ອອກຄຳສັ່ງຊື້-ຂາຍຫຼັກຊັບໃຫ້ຝ່າຍ ຂ ໂດຍຜ່ານການນຳໃຊ້ເຄື່ອງມືເຕັກນິກສື່ສານ ເຊັ່ນ: ໂທລະສັບ, ອິນເຕີເນັດ ແລະ ເຄື່ອງມືຊື່ສານອື່ນໆ ຕາມການກຳນົດຂອງຝ່າຍ ຂ.

**ມາດຕາ 6: ຂັ້ນຕອນການສົ່ງ ຮັບຄຳສັ່ງຊື້-ຂາຍຫຼັກຊັບທາງກົງ**

1. ຝ່າຍ ກ ທີ່ມີຈຸດປະສົງຊື້-ຂາຍຫຼັກຊັບທາງກົງ ຕ້ອງຕື່ມຂໍ້ມູນໃສ່ແບບຟອມໃບຄຳສັ່ງຊື້-ຂາຍໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມການກຳນົດຂອງ ຝ່າຍ ຂ. ພາຍຫຼັງຕື່ມຂໍ້ມູນໃສ່ແບບຟອມໃບຄຳສັ່ງສຳເລັດແລ້ວ ຝ່າຍ ກ ຕ້ອງສົ່ງໃຫ້ຝ່າຍ ຂ ເພື່ອປ້ອນຂໍ້ມູນເຫຼົ່ານັ້ນ ໃສ່ລະບົບຊື້-ຂາຍຂອງຕະຫຼາດ;
2. ພະນັກງານຂອງຝ່າຍ ຂ ຈະກວດກາເບິ່ງຄວາມຖືກຕ້ອງຂອງແບບຟອມຄຳສັ່ງຂອງຝ່າຍ ກ ແລະ ເຊັນຢັ້ງຢືນ;
3. ອີງຕາມສັນຍາສະບັບນີ້ ແບບຟອມໃບຄຳສັ່ງທີ່ມີລາຍເຊັນທັງສອງຝ່າຍ ຖືວ່າມີຜົນບັງຄັບໃຊ້;
4. ຝ່າຍ ກ ສາມາດຊື້-ຂາຍຫຼັກຊັບທາງກົງ ໂດຍການມອບສິດຢ່າງເປັນລາຍລັກອັກສອນໃຫ້ຝ່າຍ ຂ ຫຼື ບຸກຄົນທີສາມ. ໃນກໍລະນີນີ້ ລາຍເຊັນຂອງຜູ້ໄດ້ຮັບມອບສິດຈາກຝ່າຍ ກ ຢູ່ໃນແບບຟອມຄຳສັ່ງ ຖືວ່າເປັນຄຳສັ່ງຊື້-ຂາຍ ຂອງຝ່າຍ ກ.



ເຊັນບ່ອນນີ້ ⇨ _____

**ມາດຕາ 7: ຂັ້ນຕອນການສົ່ງ ຮັບຄຳສັ່ງຊື້-ຂາຍຫຼັກຊັບທາງອ້ອມ**

1. ຝ່າຍ ກ ທີ່ມີຈຸດປະສົງຊື້-ຂາຍຫຼັກຊັບທາງອ້ອມ ຕ້ອງສະເໜີຄຳສັ່ງຊື້-ຂາຍຫຼັກຊັບຂອງຕົນຜ່ານທາງໂທລະສັບ, ອິນເຕີເນັດ ແລະ ວິທີການອື່ນໆ ຕາມການກຳນົດຂອງຝ່າຍ ຂ.
2. ພະນັກງານ/ລະບົບຂອງຝ່າຍ ຂ ຈະປະຕິບັດຄຳສັ່ງຂອງຝ່າຍ ກ ພາຍຫຼັງພະນັກງານຂອງຝ່າຍ ຂ ໄດ້ຮັບຂໍ້ມູນຈາກຝ່າຍ ກ ທີ່ເຫັນວ່າຖືກຕ້ອງ;
3. ການຊື້-ຂາຍຫຼັກຊັບທາງອ້ອມ ໂດຍຜ່ານທາງໂທລະສັບ, ອິນເຕີເນັດ ແລະ ວິທີການອື່ນໆ ຕາມການກຳນົດຂອງຝ່າຍ ຂ ແລະ ຝ່າຍ ກ ຕົກລົງມອບສິດໃຫ້ພະນັກງານຂອງຝ່າຍ ຂ ປະຕິບັດຄຳສັ່ງຊື້-ຂາຍ ແລະ ລົງລາຍເຊັນໃບແບບຟອມຄຳສັ່ງຕາມການມອບໝາຍຂອງຝ່າຍ ກ ແລະ ຝ່າຍ ກ ຍອມຮັບຜົນການຊື້-ຂາຍຫຼັກຊັບທັງໝົດທີ່ເກີດຈາກການມອບສິດດັ່ງກ່າວ ໃນທຸກກໍລະນີ.

**ມາດຕາ 8: ການບັນທຶກຄຳສັ່ງຊື້-ຂາຍຫຼັກຊັບ**

ໃນເວລາຮັບຄຳສັ່ງຊື້-ຂາຍຫຼັກຊັບຈາກຝ່າຍ ກ, ຝ່າຍ ຂ ຕ້ອງບັນທຶກຢ່າງເປັນລາຍລັກອັກສອນ ຫຼື ບັກທຶກສຽງ ແລະ ວິທີການອື່ນໆ ເພື່ອນຳໃຊ້ເປັນສິ່ງຢັ້ງຢືນຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ. ການບັນທຶກດັ່ງກ່າວ ຝ່າຍ ຂ ຕ້ອງເກັບຮັກສາໄວ້ເປັນເວລາ 5 ປີ.

**ມາດຕາ 9: ຜົນສັກສິດຂອງຄຳສັ່ງຊື້-ຂາຍຫຼັກຊັບ**

ທຸກຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ ລວມທັງຄຳສັ່ງດ້ວຍວາຈາ ຫຼື ເປັນລາຍລັກອັກສອນ ຫຼື ທາງໂທລະສັບ, ອິນເຕີເນັດ ແລະ ດ້ວຍວິທີການອື່ນໆ ຕາມການກຳນົດຂອງຝ່າຍ ຂ ພາຍ ຫຼັງຝ່າຍ ຂ ໄດ້ຮັບຊາບຄຳສັ່ງນັ້ນຢ່າງຊັດເຈນ ປັດສະຈາກຂໍ້ສົງໃສແລ້ວຖືວ່າເປັນຄຳສັ່ງທີ່ຖືກຕ້ອງຂອງຝ່າຍ ກ ແລະ ໃນທຸລະກຳນີ້ ຝ່າຍ ກ ຕ້ອງຍອມຮັບຜົນຂອງຄຳສັ່ງດັ່ງກ່າວເໝືອນກັບວ່າຝ່າຍ ກ ໄດ້ເຮັດທຸລະກຳນັ້ນດ້ວຍຕົນເອງທຸກປະການ.

**ມາດຕາ 10: ການແຈ້ງຜົນການຊື້-ຂາຍຫຼັກຊັບ**

ຝ່າຍ ຂ ຕ້ອງແຈ້ງຜົນການຊື້-ຂາຍຫຼັກຊັບໃຫ້ແກ່ຝ່າຍ ກ ຫຼື ຜູ້ຕາງໜ້າຊາບພາຍຫຼັງການຈັບຄູ່ຊື້-ຂາຍສຳເລັດ ຊຶ່ງລວມມີຂໍ້ມູນດັ່ງນີ້: (1) ລາຄາ, ຈຳນວນ, ວັນທີຊຳລະ, ຄ່າທຳນຽມນາຍໜ້າ ແລະ ອື່ນໆ ໂດຍຜ່ານທາງໄປສະນີ, ໂທລະສັບ, ອິນເຕີເນັດ ແລະ ຜ່ານເຄື່ອງມືສື່ສານອື່ນໆ ຕາມການກຳນົດຂອງຝ່າຍ ຂ. ໃນກໍລະນີຝ່າຍ ກ ບໍ່ຕ້ອງການຂໍ້ມູນທີ່ລະບຸໄວ້ໃນມາດຕານີ້ ຝ່າຍ ຂ ບໍ່ມີພັນທະແຈ້ງໃຫ້ຝ່າຍ ກ ຊາບ.

**ມາດຕາ 11: ການຍົກເລີກ ຫຼືປ່ຽນແປງຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ**

ການຍົກເລີກ ຫຼື ປ່ຽນແປງຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ ທັງໝົດ ຫຼື ບາງສ່ວນ ຝ່າຍ ກ ຕ້ອງແຈ້ງໃຫ້ຝ່າຍ ຂ ຊາບກ່ອນຄຳສັ່ງຊື້-ຂາຍຂອງຝ່າຍ ກ ຖືກຈັດຕັ້ງປະຕິບັດສຳເລັດ. ການຍົກເລີກ ຫຼື ປ່ຽນແປງຄຳສັ່ງດັ່ງກ່າວ ຈະມີຜົນສັກສິດກໍຕໍ່ເມື່ອຝ່າຍ ກ ໄດ້ຮັບແຈ້ງຢືນຢັນຈາກຝ່າຍ ຂ ເທົ່ານັ້ນ. ການຍົກເລີກ ຫຼື ການປ່ຽນແປງດັ່ງກ່າວ ຈະບໍ່ມີຜົນກະທົບ ຕໍ່ທຸລະກຳຕ່າງໆ ທີ່ຝ່າຍ ຂ ໄດ້ປະຕິບັດກ່ອນການຍົກເລີກ ຫຼື ປ່ຽນແປງຄຳສັ່ງຊື້-ຂາຍໄດ້ຮັບການຢືນຢັນ.

**ມາດຕາ 12: ການຊຳລະເງິນໃນການຊື້-ຂາຍຫຼັກຊັບ**

1. ຝ່າຍ ກ ຕ້ອງມີບັນຊີເງິນຝາກຢູ່ທະນາຄານຕົວແທນຂອງຝ່າຍ ຂ ເພື່ອຮອງຮັບການຊຳລະຊື້-ຂາຍຫຼັກຊັບ. ບັນຊີເງິນຝາກດັ່ງກ່າວ ຕ້ອງແມ່ນບັນຊີເງິນຝາກກະແສລາຍວັນ ຫຼື ບັນຊີເງິນຝາກປະຢັດ ຫຼື ບັນຊີປະເພດອື່ນໆ ຕາມການກຳນົດຂອງ ສຳນັກງານ ຄຄຊ.
2. ກໍລະນີຝ່າຍ ກ ສົ່ງຄຳສັ່ງຊື້ຫຼັກຊັບຜ່ານຝ່າຍ ຂ, ຝ່າຍ ກ ຕ້ອງໂອນເງິນໃຫ້ຄົບຖ້ວນຕາມມູນຄ່າຫຼັກຊັບທີ່ຝ່າຍ ກ ສັ່ງຊື້ເຂົ້າບັນຊີເງິນຝາກຂອງຝ່າຍ ຂ (ບັນຊີເພື່ອລູກຄ້າ) ກ່ອນສົ່ງຄຳສັ່ງຊື້. ໃນກໍລະນີ ຄຳສັ່ງຊື້ຂອງຝ່າຍ ກ ບໍ່ປະສົບຜົນສຳເລັດທັງໝົດ ຫຼື ບາງສ່ວນ ແລະ ຝ່າຍ ກ ຕ້ອງການຖອນເງິນສ່ວນທີ່ເຫຼືອຄືນ ແມ່ນໃຫ້ຝ່າຍ ກ ໄປພົວພັນກັບທະນາຄານຕົວແທນຂອງຝ່າຍ ຂ ດ້ວຍຕົນເອງເລີຍ.
3. ກໍລະນີຝ່າຍ ກ ສົ່ງຄຳສັ່ງຂາຍຫຼັກຊັບຜ່ານຝ່າຍ ຂ ຖ້າວ່າຄຳສັ່ງດັ່ງກ່າວສຳເລັດ ເງິນທີ່ໄດ້ຈາກການຂາຍຈະຖືກໂອນເຂົ້າບັນຊີເງິນຝາກຂອງຝ່າຍ ຂ (ບັນຊີເພື່ອລູກຄ້າ) ພາຍໃນເວລາ T+2. ຖ້າຝ່າຍ ກ ຕ້ອງການຖອນເງິນດັ່ງກ່າວ ໃຫ້ຝ່າຍ ກ ໄປພົວພັນກັບທະນາຄານຕົວແທນຂອງຝ່າຍ ຂ ດ້ວຍຕົນເອງເລີຍ.
4. ຝ່າຍ ກ ຕົກລົງແຕ່ງຕັ້ງ ແລະ ມອບໝາຍສິດໃຫ້ຝ່າຍ ຂ ໃນການເບີກຖອນ ຫຼື ອາຍັດເງິນໃນບັນຊີຂອງຝ່າຍ ກ ເພື່ອຊຳລະໜີ້ສິນຕ່າງໆ ທີ່ຝ່າຍ ກ ມີຕໍ່ຝ່າຍ ຂ ໂດຍບໍ່ມີເງື່ອນໄຂ ແລະ ຂໍ້ໂຕ້ແຍ້ງໃດໆ ໃນກໍລະນີ ຝ່າຍ ກ ໄດ້ສັ່ງໃຫ້ຝ່າຍ ຂ ເຮັດທຸລະກຳເພື່ອຜົນປະໂຫຍດຂອງຝ່າຍ ກ ຕາມລະບຽບຂອງຝ່າຍ ຂ.
5. ໃນກໍລະນີຝ່າຍ ກ ເສຍຊີວິດ ຫຼື ກາຍເປັນຄົນບໍ່ມີຄວາມສາມາດ ຫຼື ຄ້ອຍຄືບໍ່ມີຄວາມສາມາດ ຫຼື ຖືກຮ້ອງຟ້ອງດຳເນີນຄະດີ ຫຼື ກໍລະນີອື່ນໆ ເມື່ອຝ່າຍ ຂ ເຫັນເປັນການສົມຄວນເພື່ອປົກປ້ອງຜົນປະໂຫຍດຂອງຝ່າຍ ຂ, ຝ່າຍ ກ ຕົກລົງ ແລະ ຍິນຍອມໃຫ້ຝ່າຍ ຂ ຂາຍຫຼັກຊັບ ຫຼື ຊັບສິນ ຫຼື ສິດອື່ນໆ ຂອງຝ່າຍ ກ ທີ່ຢູ່ໃນການຄອບຄອງ ຂອງຝ່າຍ ຂ ທັງໝົດ ຫຼື ບາງສ່ວນໄດ້ທັນທີ ເພື່ອຊຳລະໜີ້ຄ້າງຊຳລະທີ່ຝ່າຍ ກ ມີຕໍ່ຝ່າຍ ຂ ແລະ ຊື້ຫຼັກຊັບທັງໝົດ ຫຼື ບາງສ່ວນເພື່ອທົດແທນຫຼັກຊັບທີ່ຝ່າຍ ກ ໄດ້ສັ່ງໃຫ້ຝ່າຍ ຂ ຂາຍໄປແລ້ວ ແຕ່ຝ່າຍ ກ ຍັງບໍ່ທັນໄດ້ສົ່ງມອບຫຼັກຊັບໃຫ້ຝ່າຍ ຂ. ນອກຈາກນີ້ ຝ່າຍ ຂ ສາມາດຕັດສິນປົດບັນຊີຂອງຝ່າຍ ກ.

**ມາດຕາ 13: ການສົ່ງ ມອບຫຼັກຊັບ**

ເມື່ອມີການຊື້-ຂາຍຫຼັກຊັບ ຕ້ອງສົ່ງມອບຫຼັກຊັບດັ່ງນີ້:

1. ໃນກໍລະນີຝ່າຍ ກ ໄດ້ສົ່ງຄຳສັ່ງຊື້ຫຼັກຊັບ ໂດຍຜ່ານຝ່າຍ ຂ ແລ້ວຄຳສັ່ງດັ່ງກ່າວປະສົບຜົນສຳເລັດ, ຝ່າຍ ກ ຈະໄດ້ຮັບຫຼັກຊັບເຂົ້າບັນຊີຫຼັກຊັບຂອງຕົນ ພາຍໃນວັນທີ່ມີການຊຳລະຄ່າຊື້ຫຼັກຊັບດັ່ງກ່າວ (T+2).
2. ໃນກໍລະນີ ຝ່າຍ ຂ ໂອນຫຼັກຊັບຜ່ານບັນຊີຝາກຫຼັກຊັບທີ່ສູນຮັບຝາກຫຼັກຊັບໃຫ້ຝ່າຍ ກ ຫຼື ຝ່າຍ ຂ ໄດ້ເກັບຮັກສາຫຼັກຊັບທີ່ຝ່າຍ ກ ມອບໝາຍໃຫ້ຊື້ ແລະ ເກັບໄວ້ກັບຝ່າຍ ຂ ຕາມຄຳສັ່ງຂອງຝ່າຍ ກ ໃຫ້ຖືວ່າຝ່າຍ ຂ ໄດ້ສົ່ງມອບຫຼັກຊັບໃຫ້ແກ່ຝ່າຍ ກ ຕາມລະບຽບການແລ້ວ.
3. ໃນກໍລະນີ ຝ່າຍ ກ ສັ່ງຂາຍຫຼັກຊັບຜ່ານຝ່າຍ ຂ, ຫຼັກຊັບຂອງຝ່າຍ ຂ ຈະຖືກໂອນໄປໃຫ້ບັນຊີຂອງຜູ້ຊື້ ພາຍໃນວັນ ແລະ ເວລາທີ່ຕະຫຼາດຫຼັກຊັບ ຫຼື ຝ່າຍ ຂ ກຳນົດ. ໃນກໍລະນີຝ່າຍ ກ ໂອນຫຼັກຊັບຜ່ານບັນຊີຝາກຫຼັກຊັບທີ່ສູນຮັບຝາກຫຼັກຊັບຈັດໄວ້ເພື່ອການຝາກ ຖອນ ຫຼື ໂອນຫຼັກຊັບໃຫ້ແກ່ຝ່າຍ ຂ ຫຼື ຝ່າຍ ກ ໄດ້ມີຄຳສັ່ງໃຫ້ຝ່າຍ ຂ ສົ່ງມອບຫຼັກຊັບຈາກຫຼັກຊັບຂອງຝ່າຍ ກ ທີ່ເກັບຮັກສາໄວ້ກັບຝ່າຍ ຂ ນັ້ນ ໃຫ້ຖືວ່າຝ່າຍ ກ ໄດ້ສົ່ງມອບຫຼັກຊັບໃຫ້ຝ່າຍ ຂ ຕາມລະບຽບການແລ້ວ.
4. ໃນກໍລະນີຝ່າຍ ກ ມີຫຼັກຊັບເກັບຮັກສາໄວ້ກັບຝ່າຍ ຂ (ໝາຍເຖິງຫຼັກຊັບຂອງຝ່າຍ ກ ທີ່ຝ່າຍ ຂ ນຳໄປຝາກໄວ້ກັບສູນຮັບຝາກຫຼັກຊັບ) ຝ່າຍ ກ ຍິນຍອມໃຫ້ຝ່າຍ ຂ ສາມາດນຳຫຼັກຊັບທີ່ເກັບຮັກສາໄວ້ນັ້ນມາສົ່ງມອບໄດ້).

**ມາດຕາ 14: ສິດ ຂອງຝ່າຍ ກ**

ອີງຕາມສັນຍາສະບັບນີ້ ຝ່າຍ ກ ມີສິດ ດັ່ງນີ້:

1. ສົ່ງຄຳສັ່ງຊື້-ຂາຍຫຼັກຊັບໂດຍຜ່ານ ຝ່າຍ ຂ;
2. ຮັບໃບແຈ້ງຜົນການເຄື່ອນໄຫວບັນຊີຫຼັກຊັບ ແລະ ຍອດເງິນໃນບັນຊີຫຼັກຊັບຈາກຝ່າຍ ຂ ເມື່ອຕ້ອງການ;
3. ມີສິດຊື້-ຂາຍຫຼັກຊັບ ໂດຍສອດຄ່ອງກັບດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ;
4. ຝ່າຍ ກ ຕ້ອງຮັບຮູ້ລະບຽບການທີ່ກ່ຽວຂ້ອງຕ່າງໆ ລວມເຖິງຂໍ້ກຳນົດ ແລະ ເງື່ອນໄຂໃນການຊື້-ຂາຍຫຼັກຊັບຂອງບໍລິສັດ ແລະ ຮັບຊາບວ່າເປັນໜ້າທີ່ຂອງຝ່າຍ ກ ຕ້ອງທຳຄວາມເຂົ້າໃຈ ແລະ ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງຕ່າງໆ, ຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ທີ່ບໍລິສັດຈະປະກາດໃຊ້ໃນຕໍ່ໜ້າ; ປະຕິບັດຢ່າງຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
5. ຂໍຜົນການວິເຄາະ ແລະ ຂໍ້ມູນທີ່ປະຕິບັດໂດຍຜະແນກວິເຄາະຫຼັກຊັບຂອງຝ່າຍ ຂ ຕາມຄວາມອາດສາມາດຂອງ ຝ່າຍ ຂ;
6. ມີສິດທວງຖາມຜັນທະຕ່າງໆທີ່ຝ່າຍ ຂ ມີຕໍ່ຝ່າຍ ກ.



ເຊັນບ່ອນນີ້ ⇨ _____

**<u>ມາດຕາ 15</u>: ພັນທະຂອງຝ່າຍ ກ**

ອີງຕາມສັນຍາສະບັບນີ້ ຝ່າຍ ກ ມີພັນທະຕໍ່ຝ່າຍ ຂ ດັ່ງນີ້:

1. ສະໜອງຂໍ້ມູນທີ່ຖືກຕ້ອງ ແລະ ຄົບຖ້ວນໃຫ້ແກ່ຝ່າຍ ຂ. ໃນກໍລະນີຝ່າຍ ກ ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ຄົບຖ້ວນ ຝ່າຍ ກ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງດັ່ງກ່າວ;
2. ຝ່າຍ ກ ຕ້ອງມີບັນຊີເງິນຝາກຢູ່ທະນາຄານຕົວແທນຂອງຝ່າຍ ຂ ເພື່ອຮອງຮັບການຊຳລະການຊື້-ຂາຍຫຼັກຊັບ. ບັນຊີເງິນຝາກດັ່ງກ່າວ ຕ້ອງແມ່ນບັນຊີເງິນຝາກກະແສລາຍວັນ ຫຼື ບັນຊີເງິນຝາກປະຢັດ ຫຼື ບັນຊີເງິນຝາກປະເພດ ອື່ນໆ ຕາມການກຳນົດຂອງສຳນັກງານ ຄລຕ ໃນແຕ່ລະໄລຍະ;
3. ສະໜອງເອກະສານຕ່າງໆ ທີ່ຈຳເປັນຕາມການສະເໜີຂອງຝ່າຍ ຂ;
4. ຝ່າຍ ກ ຍິນດີມອບສິດ ແລະ ແຕ່ງຕັ້ງໃຫ້ຝ່າຍ ຂ ໃນການດຳເນີນທຸລະກຳຕ່າງໆ ເຊັ່ນ: ການສະເໜີ ຂໍອະນຸຍາດຕ່າງໆ ແລະ ການປະກອບເອກະສານ ເພື່ອອຳນວຍຄວາມສະດວກໃນການຂາຍຮຸ້ນ (ຫຼັກຊັບ) ຂອງຕົນ ໂດຍຝ່າຍ ກ ຍິນດີຮັບຜິດຊອບຈ່າຍຄ່າທຳນຽມຕ່າງໆ ຕາມລະບຽບການ;
5. ຊຳລະຄ່າຫຼັກຊັບຕາມມູນຄ່າທີ່ຝ່າຍ ກ ສົ່ງຄຳສັ່ງຊື້ຜ່ານຝ່າຍ ຂ;
6. ຊຳລະຄ່າທຳນຽມ, ຄ່າບໍລິການຊື້-ຂາຍຫຼັກຊັບ ແລະ ຄ່າບໍລິການອື່ນໆ (ຖ້າມີ) ສຳລັບການບໍລິການທີ່ຝ່າຍ ຂ ສະໜອງໃຫ້;
7. ຮັບປະກັນໃຫ້ມີຫຼັກຊັບພຽງພໍໃນບັນຊີຫຼັກຊັບຂອງຕົນກ່ອນອອກຄຳສັ່ງຂາຍຫຼັກຊັບ ແລະ ມີເງິນໃນບັນຊີທະນາຄານ ພຽງພໍເພື່ອຊຳລະຄ່າຫຼັກຊັບ ແລະ ຄ່າທຳນຽມຕ່າງໆ ທີ່ເກີດຈາກການນຳໃຊ້ບໍລິການຊື້-ຂາຍຫຼັກຊັບທຸກຄັ້ງ;
8. ຍອມຮັບຜົນການຊື້-ຂາຍຫຼັກຊັບທີ່ຝ່າຍ ຂ ໄດ້ປະຕິບັດຕາມສຳສັ່ງຂອງຝ່າຍ ກ;
9. ໃນກໍລະນີຝ່າຍ ກ ເຫັນວ່າມີການສົ່ງຄຳສັ່ງຊື້-ຂາຍຫຼັກຊັບຜິດພາດ ຫຼື ບໍ່ຖືກຕ້ອງ ຝ່າຍ ກ ຕ້ອງແຈ້ງໃຫ້ ຝ່າຍ ຂ ຊາບພາຍໃນວັນທີ່ມີການຊື້-ຂາຍຫຼັກຊັບ ຖ້າບໍ່ດັ່ງນັ້ນ ຝ່າຍ ຂ ຈະຖືວ່າ ຝ່າຍ ກ ຍອມຮັບຄຳສັ່ງຊື້-ຂາຍ ແລະ ຄຳສັ່ງຊື້-ຂາຍດັ່ງກ່າວ ເປັນຄຳສັ່ງຊື້-ຂາຍທີ່ຖືກຕ້ອງ;
10. ຝ່າຍ ກ ຍອມຮັບວ່າ ທຸກການຊື້-ຂາຍຫຼັກຊັບທີ່ເກີດຈາກຄຳສັ່ງຊື້-ຂາຍຂອງລູກຄ້າ ຖືວ່າເປັນການຕັດສິນໃຈຂອງລູກຄ້າທັງໝົດ. ຂໍ້ມູນຂ່າວສານ ຫຼື ການແນະນຳໃດໆ ກ່ຽວກັບການຊື້-ຂາຍຫຼັກຊັບ ຈາກພະນັກງານຄົນໃດຄົນໜຶ່ງຂອງ ຝ່າຍ ຂ ຖືວ່າບໍ່ແມ່ນພາລະຜູກພັນຂອງຝ່າຍ ຂ ແລະ ຝ່າຍ ຂ ບໍ່ມີຄວາມຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ ເວັ້ນແຕ່ເປັນການຈົງໃຈ ຫຼື ຄວາມປະໝາດຂອງຝ່າຍ ຂ ຫຼື ເປັນການຂັດຕໍ່ລະບຽບທີ່ກ່ຽວຂ້ອງ;
11. ຍິນຍອມໃຫ້ຝ່າຍ ຂ ເຂົ້າເປັນສະມາຊິກຂອງສູນຮັບຝາກຫຼັກຊັບຕາມກົດໝາຍ, ດຳລັດ ແລະ ລະບຽບການຕ່າງໆ ກ່ຽວກັບຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຫຼື ຕາມກົດໝາຍອື່ນໆ ໄດ້ປະກາດໃຊ້ ແລະ ໃຊ້ບໍລິການຕ່າງໆ ຂອງສູນຮັບຝາກຫຼັກຊັບດັ່ງກ່າວໃນສ່ວນທີ່ກ່ຽວຂ້ອງກັບຫຼັກຊັບຂອງຝ່າຍ ກ. ຝ່າຍ ກ ເຫັນດີໃຫ້ຝ່າຍ ຂ ປະຕິບັດຕາມຫຼັກການ, ເງື່ອນໄຂ, ວິທີການຕະຫຼອດຮອດແນວທາງປະຕິບັດຂອງສູນຮັບຝາກຫຼັກຊັບໄດ້ທຸກປະການເຊັ່ນ: ຕົກລົງໃຫ້ບໍລິສັດເປີດເຜີຍຊື່, ທີ່ຢູ່ ແລະ ລາຍລະອຽດອື່ນໆ ກ່ຽວກັບຝ່າຍ ກ ເພື່ອໃຫ້ສູນຮັບຝາກຫຼັກຊັບຮັບຊາບ;
12. ຝ່າຍ ກ ຂໍຮັບຮອງວ່າຂໍ້ມູນຕ່າງໆ ທີ່ແຈ້ງໃຫ້ແກ່ຝ່າຍ ຂ ເປັນຂໍ້ມູນທີ່ຖືກຕ້ອງ ແລະ ຄົບຖ້ວນທຸກປະການ.
13. ໃນກໍລະນີຝ່າຍ ກ ມີການປ່ຽນແປງທີ່ຢູ່, ທີ່ຢູ່ອີເມວ, ໝາຍເລກໂທລະສັບ ຫຼື ຂໍ້ມູນທີ່ສຳຄັນອື່ນໆ ທີ່ມີຜົນຕໍ່ການຈັດຕັ້ງປະຕິບັດສັນຍາສະບັບນີ້ ຝ່າຍ ກ ຕ້ອງແຈ້ງໃຫ້ ຝ່າຍ ຂ ຊາບທັນທີ. ຖ້າຂໍ້ມູນໃດທີ່ຝ່າຍ ກ ແຈ້ງໃຫ້ຝ່າຍ ຂ ເປັນຂໍ້ມູນທີ່ບໍ່ຖືກຕ້ອງເຊິ່ງມີຜົນກະທົບດ້ານລົບຕໍ່ສັນຍາສະບັບນີ້ ໃຫ້ໝາຍເຫດ້ານ້ຂອງຝ່າຍ ກ ເຖິງກຳນົດຊຳລະທັນທີ ແລະ ຖືວ່າລູກຄ້າຜິດສັນຍາ;
14. ການແຈ້ງ, ການບອກກ່າວ ຫຼື ການທວງຖາມໃດໆ ທີ່ຝ່າຍ ຂ ໄດ້ເຮັດໜັງສືສົ່ງໄປຍັງສະຖານທີ່ຢູ່ຂອງຝ່າຍ ກ ທີ່ໄດ້ລະບຸໄວ້ ຫຼື ທາງອີເມວຕາມຝ່າຍ ກ ໄດ້ແຈ້ງໄວ້ກັບຝ່າຍ ຂ, ຝ່າຍ ກ ຍິນຍອມໃຫ້ຖືວ່າມີການບອກກ່າວ ຫຼືໄດ້ຮັບແຈ້ງໂດຍຖືກຕ້ອງແລ້ວ ເຖິງວ່າຝ່າຍ ກ ໄດ້ຮັບແຈ້ງດ້ວຍຕົນເອງ ຫຼືຜູ້ອື່ນຮັບໄວ້ແທນກໍຕາມ.

**<u>ມາດຕາ 16</u>: ສິດຂອງຝ່າຍ ຂ**

ອີງຕາມສັນຍາສະບັບນີ້ ຝ່າຍ ຂ ມີສິດປະຕິເສດການປະຕິບັດຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ ເມື່ອເຫັນວ່າຄຳສັ່ງດັ່ງກ່າວ ເປັນການລະເມີດລະບຽບກົດໝາຍທີ່ກ່ຽວຂ້ອງ ຫຼື ກົດລະບຽບຂອງບໍລິສັດ. ສ່ວນຄ່າເສຍຫາຍທີ່ເກີດຂຶ້ນຈາກຄຳສັ່ງດັ່ງກ່າວ ຝ່າຍ ກ ບໍ່ມີສິດຮຽກຮ້ອງຄ່າເສຍຫາຍຈາກຝ່າຍ ຂ.

**<u>ມາດຕາ 17</u>: ພັນທະຂອງຝ່າຍ ຂ**

ອີງຕາມສັນຍາສະບັບນີ້ ຝ່າຍ ຂ ມີພັນທະຕໍ່ຝ່າຍ ກ ດັ່ງນີ້:

1. ປະຕິບັດຄຳສັ່ງຊື້-ຂາຍທັງໝົດ ທີ່ຝ່າຍ ກ ສະເໜີມາໂດຍສອດຄ່ອງກັບເງື່ອນໄຂ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຮັກສາຄວາມລັບຂອງລູກຄ້າ ເຊັ່ນ: ຫຼັກຊັບ ແລະ ເງິນໃນບັນຊີຫຼັກຊັບ, ຂໍ້ມູນການຊື້-ຂາຍຫຼັກຊັບ ຍົກເວັ້ນຕາມການກຳນົດຂອງກົດໝາຍ ຫຼື ລະບຽບການໃນແຕ່ລະໄລຍະ;
3. ແຈ້ງໃຫ້ຝ່າຍ ກ ຊາບກ່ຽວກັບຄວາມຜິດພາດໃນການຢັ້ງຢືນການຊື້-ຂາຍໃຫ້ໄວທີ່ສຸດ (ພາຍໃນມື້ ຫຼື ໃນວັນຕໍ່ມາພາຍຫຼັງການຢັ້ງຢືນຄຳສັ່ງຊື້-ຂາຍທີ່ບໍ່ຖືກຕ້ອງ);
4. ທົດແທນຄ່າເສຍຫາຍຈາກການຊື້-ຂາຍທັງໝົດທີ່ເກີດຈາກຄວາມຜິດພາດຂອງຝ່າຍ ຂ ໃຫ້ແກ່ຝ່າຍ ກ;
5. ລາຍງານຜົນການຊື້-ຂາຍຫຼັກຊັບ (ຖ້າຄຳສັ່ງຊື້-ຂາຍໄດ້ຮັບການຈັບຄູ່ທັງໝົດ ຫຼື ບາງສ່ວນ) ໃຫ້ຝ່າຍ ກ ຊາບຢ່າງເປັນລາຍລັກອັກສອນ ໂດຍສົ່ງໄປຍັງສະຖານທີ່ທີ່ຝ່າຍ ກ ໄດ້ລະບຸໄວ້ ຫຼື ທາງໂທລະສັບ ຫຼື ທາງອີເລັກໂຕຣນິກ ອື່ນໆ ຕາມທີ່ຝ່າຍ ກ ໄດ້ແຈ້ງໄວ້ກັບຝ່າຍ ຂ ຕາມຮູບແບບທີ່ຝ່າຍ ຂ ຫຼື ຕາມກົດລະບຽບກ່ຽວຂ້ອງກຳນົດ. ຖ້າຝ່າຍ ກ ບໍ່ຕ້ອງການລາຍງານດັ່ງກ່າວ ຝ່າຍ ຂ ກໍບໍ່ຈຳເປັນສົ່ງລາຍງານໃຫ້.
6. ຝ່າຍ ຂ ຈະບໍ່ຮັບຜິດຊອບຕໍ່ທຸກການສູນເສຍ ຫຼື ເສຍຫາຍທີ່ເກີດຂຶ້ນ ຍ້ອນກໍລະນີຕ່າງໆດຸ່ມນີ້:
   1) ເກີດຂຶ້ນຈາກການທີ່ຝ່າຍ ຂ ບໍ່ສາມາດປະຕິບັດຄຳສັ່ງຊື້-ຂາຍຂອງຝ່າຍ ກ ໄດ້ທັງໝົດ ຍ້ອນຄຳສັ່ງຊື້-ຂາຍ ຂອງຝ່າຍ ກ ບໍ່ຖືກຈັບຄູ່ຊື້-ຂາຍ;
   2) ເກີດຈາກຄວາມຜິດທີ່ເກີດຈາກບຸກຄົນທີສາມ ຊຶ່ງລວມມີແຕ່ບໍ່ຈຳກັດຄຸ່ຮ່ວມງານຂອງຝ່າຍ ຂ ໃນເວລາສະໜອງການບໍລິການຊື້-ຂາຍຫຼັກຊັບແບບອອນລາຍທາງໄກ;
   3) ເກີດຈາກຄວາມຜິດພາດຂອງລະບົບ IT ແລະ ທາງດ້ານເຕັກນິກໃດໜຶ່ງທີ່ກ່ຽວຂ້ອງ;
   4) ເກີດຈາກຝ່າຍ ຂ ປະຕິບັດຊັກຊ້າ ແລະ ບໍ່ສາມາດປະຕິບັດພາລະໜ້າທີ່ຂອງຕົນຕາມເງື່ອນໄຂ ແລະ ກົດລະບຽບ ຍ້ອນມີຄວາມຜິດພາດຂອງລະບົບ IT, ການຈັດສັນຂໍ້ມູນຂອງລະບົບ ແລະລະບົບການສື່ສານລົ້ມເຫຼວ;
   5) ບໍ່ສາມາດດຳເນີນການຊື້-ຂາຍໄດ້ ຍ້ອນຝ່າຍ ກ ສະໜອງຂໍ້ມູນໃຫ້ຊັກຊ້າ, ບໍ່ຄົບຖ້ວນ ແລະ ບໍ່ຖືກຕ້ອງ ຫຼື ຝ່າຍ ຂ ບໍ່ສາມາດຕິດຕໍ່ຫາຝ່າຍ ກ ໂດຍມີຂໍ້ມູນຢັ້ງຢືນວ່າຝ່າຍ ຂ ໄດ້ພະຍາຍາມຕິດຕໍ່ຜົວພັນຫາຝ່າຍ ກ.
   6) ຄ່າໃຊ້ຈ່າຍໃດໆ ທີ່ເກີດຂຶ້ນອັນເນື່ອງມາຈາກ ຫຼື ທີ່ກ່ຽວກັບສັນຍານີ້ ຫຼື ກ່ຽວກັບການກະທຳ ຫຼື ການຍົກເວັ້ນ ການກະທຳຂອງຝ່າຍ ກ ຫຼື ຕົວແທນຂອງຝ່າຍ ກ ລວມເຖິງບັນດາຄວາມເສຍຫາຍ ແລະ ຄ່າໃຊ້ຈ່າຍໃດໆ ທີ່ ຝ່າຍ ຂ ອາດໄດ້ຮັບອັນເນື່ອງມາຈາກການຮ້ອງຟ້ອງ ຫຼື ຮ້ອງຟ້ອງໂດຍບຸກຄົນອື່ນໃຫ້ຝ່າຍ ຂ ຮັບຜິດຊອບຕໍ່ສັນຍານີ້ ເຊິ່ງບໍ່ໄດ້ເກີດຂຶ້ນຈາກການກະທຳຂອງຝ່າຍ ຂ ແຕ່ປະການໃດ ຍົກເວັ້ນການກະທຳໂດຍຕັ້ງໃຈ ຫຼື ການປະມາດຂອງຝ່າຍ ຂ ຫຼື ຂອງພະນັກງານ ຫຼື ຂອງລູກຈ້າງ.
   7) ຄວາມເສຍຫາຍທີ່ເກີດຈາກອັກຄີໄຟ, ພະຍຸ, ການນັດຢຸດງານ, ການກໍ່ຄວາມບໍ່ສະຫງົບ, ການປະທ້ວງ, ສົງຄາມ, ການເຂົ້າຄວບຄຸມໂດຍອຳນາດລັດ, ຂໍ້ຜິດພາດໃນການຈັດສົ່ງຂໍ້ມູນ, ຂໍ້ຜິດພາດກ່ຽວກັບລະບົບເຄືອຂ່າຍການສື່ສານ ຫຼື ຄວາມຊັກຊ້າອັນເນື່ອງມາຈາກເຄືອຄ່າຍການສື່ສານຂອງບຸກຄົນພາຍນອກ ຫຼື ເຄືອຂ່າຍ ການສື່ສານຂອງລັດ, ອຸປະກອນເຄື່ອງໃຊ້ຂັດຂ້ອງ, ກະແສໄຟຟ້າຂັດຂ້ອງ ຫຼື ເຫດສຸດວິໄສທີ່ມີຜົນກະທົບຕໍ່ການດຳເນີນງານຂອງຝ່າຍ ຂ. ເຫດການດັ່ງກ່າວ ຕ້ອງບໍ່ເກີດຈາກຄວາມຕ້ອງໃຈ ຫຼື ຄວາມປະມາດຂອງຝ່າຍ ຂ ຫຼື ພະນັກງານ ຫຼື ລູກຈ້າງຂອງຝ່າຍ ຂ.

**<u>ມາດຕາ 18</u>: ຮູບການ ແລະອົງການແກ້ໄຂຂໍ້ຂັດແຍ່ງ**

ທຸກໆ ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນສັນຍາສະບັບນີ້ ຕ້ອງແກ້ໄຂໂດຍສັນຕິວິທີ ແລະ ສະເໝີພາບ. ໃນກໍລະນີຂໍ້ຂັດແຍ່ງທີ່ເກີດຂຶ້ນບໍ່ສາມາດແກ້ໄຂໄດ້ ທັງສອງຝ່າຍສາມາດສົ່ງຂໍ້ຂັດແຍ່ງດັ່ງກ່າວໄປໃຫ້ຕົວແທນທີ່ເປັນກຳມະການ ຫຼື ສົ່ງໄປທີ່ສຳນັກງານແກ້ໄຂຂໍ້ຂັດແຍ່ງ ເພື່ອແກ້ໄຂຕາມກົດໝາຍຂອງ ສປປ ລາວ.



ເຊັນບ່ອນນີ້ ⇨ _____

**<u>ມາດຕາ 19</u>: ການແຈ້ງກ່ຽວກັບການປ່ຽນແປງຂໍ້ມູນຂອງຝ່າຍ ກ**

ທຸກການປ່ຽນແປງຂໍ້ມູນ ຝ່າຍ ກ ຕ້ອງແຈ້ງໃຫ້ຝ່າຍ ຂ ຊາບ ແລະ ຈະຕ້ອງມອບສິ່ງດ້ວຍມື ຫຼື ສົ່ງທາງໄປສະນີລົງທະບຽນ, ອີເມວໄປຫາຫ້ອງການຈົດທະບຽນຂອງຝ່າຍສັນຍາທີ່ກ່ຽວຂ້ອງ.

**<u>ມາດຕາ 20</u>: ການຍົກເລີກການປະຕິບັດສັນຍາ**

ສັນຍາສະບັບນີ້ ຈະໄດ້ຮັບການຍົກເລີກໃນກໍລະນີດັ່ງຕໍ່ໄປນີ້:

1. ໄດ້ຮັບການເຫັນດີຢ່າງເປັນລາຍລັກອັກສອນຈາກທັງສອງຝ່າຍ;
2. ກໍລະນີຝ່າຍ ກ ສູນເສຍສິດທາງແພ່ງ ຫຼື ຝ່າຍ ຂ ສູນເສຍສະຖານະພາບດ້ານກົດໝາຍໃນການເປັນນິຕິບຸກຄົນເຊັ່ນ: ຍຸດເຊົາກິດຈະການ, ລົ້ມລະລາຍ ແລະ ອື່ນໆ.
3. ຝ່າຍໃດຝ່າຍໜຶ່ງບໍ່ສາມາດສືບຕໍ່ປະຕິບັດສັນຍາສະບັບນີ້ ເນື່ອງຈາກເຫດສຸດວິໄສ;
4. ຝ່າຍໃດຝ່າຍໜຶ່ງລະເມີດເງື່ອນໄຂໃນສັນຍາສະບັບນີ້ ແລະ ການຮັກສາສັນຍາສະບັບນີ້ ສ້າງຄວາມເສຍຫາຍຢ່າງຮ້າຍແຮງຕໍ່ຄູ່ສັນຍາ.

ຫາກຄູ່ສັນຍາຝ່າຍໃດຝ່າຍໜຶ່ງມີຈຸດປະສົງຍົກເລີກສັນຍາຕ້ອງແຈ້ງໃຫ້ຄູ່ສັນຍາຮັບຊາບຢ່າງເປັນລາຍລັກອັກສອນຊາບກ່ອນ 7 ວັນ. ການຍົກເລີກສັນຍານີ້ ບໍ່ກະທົບຕໍ່ສິດ ແລະ ໜ້າທີ່ຂອງຄູ່ສັນຍາທີ່ມີກ່ອນການຍົກເລີກສັນຍາສະບັບນີ້.

**<u>ມາດຕາ 21</u>: ໝາຍເຫດ**

1. ເມື່ອລົງລາຍເຊັນໃນສັນຍານີ້ແລ້ວ ຝ່າຍ ກ ຮັບຮູ້ວ່າລາຄາຂອງຫຼັກຊັບມີການເໜັງຕີງຂຶ້ນ ຫຼື ລົງຢູ່ສະເໝີ. ໃນບາງກໍລະນີຫຼັກຊັບອາດສູນເສຍຄຸນຄ່າທັງໝົດ. ຝ່າຍ ກ ຍອມຮັບວ່າ ການຊື້-ຂາຍຫຼັກຊັບມີຄວາມສ່ຽງ.
2. ເມື່ອລົງລາຍເຊັນໃນສັນຍານີ້ແລ້ວ ຝ່າຍ ກ ຮັບຮູ້ວ່າການສົ່ງຄຳສັ່ງຊື້-ຂາຍຫຼັກຊັບຜ່ານລະບົບອິນເຕີເນັດ ແລະ ໂທລະສັບ ມີຄວາມສ່ຽງຊຶ່ງອາດເກີດຈາກຄວາມຜິດພາດຂອງລະບົບ ແລະ ບຸກຄົນທີສາມ. ຝ່າຍ ກ ພ້ອມທີ່ຈະຮັບຄວາມສ່ຽງ ແລະ ການສູນເສຍທີ່ອາດເກີດຂຶ້ນຈາກການສົ່ງຄຳສັ່ງປະເພດນີ້ ເນື່ອງຈາກຄວາມຜິດພາດຂອງລະບົບ, ຂອງບຸກຄົນທີສາມ ແລະ ຈາກການກະທຳຂອງຝ່າຍ ກ ຊຶ່ງມີຜົນກະທົບຕໍ່ການເຄື່ອນໄຫວຊື້-ຂາຍຫຼັກຊັບ ຫຼື ການນຳໃຊ້ບັນຊີຊື້-ຂາຍຫຼັກຊັບຂອງຝ່າຍ ກ.
3. ເມື່ອລົງລາຍເຊັນໃນສັນຍານີ້ແລ້ວ ຝ່າຍ ກ ຮັບຮູ້ວ່າ ຝ່າຍ ຂ ໄດ້ແຈ້ງຕໍ່ຝ່າຍ ກ ຮັບຊາບ ກ່ຽວກັບໜ້າທີ່, ໃບອະນຸຍາດດຳເນີນທຸລະກິດ, ຂອບເຂດການດຳເນີນທຸລະກິດ, ທຶນຈົດທະບຽນ ແລະ ຜູ້ຕາງໜ້າຂອງບໍລິສັດ.
4. ຝ່າຍ ກ ຮັບປະກັນການປະຕິບັດຢ່າງເຂັ້ມງວດຄຳແນະນຳ, ລະບຽບ ແລະ ເງື່ອນໄຂຂອງຝ່າຍ ຂ ກ່ຽວກັບການນຳໃຊ້ບັນຊີ ແລະ ວິທີການຊື້-ຂາຍຫຼັກຊັບ.

**<u>ມາດຕາ 22</u>: ການປະຕິບັດກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ**

ຝ່າຍ ກ ແລະ ຝ່າຍ ຂ ຕ້ອງປະຕິບັດຕາມກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

**<u>ມາດຕາ 23</u>: ຜົນສັກສິດຂອງສັນຍາ**

ສັນຍາສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ທຸກໆ ການປັບປຸງໃນສັນຍາສະບັບນີ້ ຕ້ອງໄດ້ນັບການຕົກລົງເຫັນດີຢ່າງເປັນລາຍລັກອັກສອນຈາກທັງສອງຝ່າຍ. ສັນຍາສະບັບນີ້ ສ້າງຂຶ້ນເປັນ 2 ສະບັບ, ແຕ່ລະຝ່າຍຮັກສາໄວ້ ຝ່າຍລະ 1 ສະບັບ ແຕ່ລະສະບັບມີຄຸນຄ່າທາງກົດໝາຍເທົ່າທຽມກັນ.

| | |
|---|---|
| <u>ຕາງໜ້າຝ່າຍ ກ</u> | <u>ຕາງໜ້າຝ່າຍ ຂ</u> |
| (ລູກຄ້າ) | (ຕາງໜ້າບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ) |
| (ຊື່ ແລະລາຍເຊັນ) | (ຊື່ ແລະລາຍເຊັນ) |

ເຊັນບ່ອນນີ້ ⇨ _____

| | |
|---|---|
| <u>ພະຍານຄົນທີ 1:</u> | <u>ພະຍານຄົນທີ 2:</u> |
| (ຊື່ ແລະລາຍເຊັນ) | (ຊື່ ແລະລາຍເຊັນ) |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

***********************************

**ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ**
BCEL KT Securities Co.Ltd

# ສັນຍາແຕ່ງຕັ້ງນາຍໜ້າຊື້-ຂາຍຫຼັກຊັບ
## (ສຳລັບນັກລົງທຶນພາຍໃນ ປະເພດນິຕິບຸກຄົນ)

ເລກທີ_____/ທຄຕລ-ກທ/ກຕລ

❑ ບັນຊີຮຸ້ນ ❑ ບັນຊີຮຸ້ນກູ້ ❑ ບັນຊີພັນທະບັດ

ເລກບັນຊີ: | | | | | | |

ສັນຍາສະບັບນີ້ ໄດ້ຮັບການສ້າງຂຶ້ນໃນວັນທີ ____/____/202___ ທີ່ສຳນັກງານ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ລະຫວ່າງ:

**ຝ່າຍ ກ: ລູກຄ້າ**

ຊື່ນິຕິບຸກຄົນ_____;

ຊື່ຜູ້ອຳນວຍການ:_____ໃບທະບຽນວິສາຫະກິດເລກທີ:_____ອອກໃຫ້ທີ່:_____;

ລົງວັນທີ:_____ໝົດອາຍຸ:_____;ທີ່ຢູ່ປະຈຸບັນ: _____;

ໂທລະສັບຕັ້ງໂຕະ_____ ໂທລະສັບມືຖື: _____ທີ່ຢູ່ອີເມວ ເພື່ອນຳໃຊ້ຕິດຕໍ່ຊື້-ຂາຍຫຼັກຊັບ _____.

ບັນຊີທະນາຄານເລກທີ: LAK_____USD_____

THB_____CNY_____

**ແລະ**

**ຝ່າຍ ຂ: ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ**

ສຳນັກງານໃຫຍ່ຕັ້ງຢູ່: ຊັ້ນ 1 ອາຄານ A1, ຖະໜົນຈົງລ້ຽວ, ເຂດເສດຖະກິດພິເສດບຶງທາດຫຼວງ, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ: (85621) 265477, www.bcel kt.com ,ໃບອະນຸຍາດສ້າງຕັ້ງເລກທີ: 11/ຄຄຊ, ລົງວັນທີ 11 ກັນຍາ 2024;

ຊື່ ແລະ ນາມສະກຸນຜູ້ຕາງໜ້າທີ່ໄດ້ຮັບມອບສິດ: **ທ່ານ ນ. ແສງລາວີ ວົງສາວັນທອງ** ຕຳແໜ່ງ: ຫົວໜ້າພະແນກຊື້-ຂາຍຫຼັກຊັບ ຕາມໃບມອບສິດເລກທີ _____/_____. ລົງວັນທີ_____/____/ 202__.

ທັງສອງຝ່າຍ ໄດ້ຕົກລົງເຊັນສັນຍາຮ່ວມກັນ ໂດຍມີເງື່ອນໄຂດັ່ງລຸ່ມນີ້:

**ມາດຕາ 1: ຈຸດປະສົງຂອງສັນຍາ**

ສັນຍາສະບັບນີ້ສ້າງຂຶ້ນເພື່ອກຳນົດສິດ ແລະ ພັນທະຂອງຄູ່ສັນຍາ, ຫຼັກການ ແລະ ເງື່ອນໄຂໃນການສົ່ງ- ຮັບຄຳສັ່ງຊື້-ຂາຍຫຼັກຊັບ, ການສະສາງ-ຊຳລະລະຫວ່າງຝ່າຍ ກ ແລະ ຝ່າຍ ຂ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດຄຳສັ່ງຊື້-ຂາຍ ໃຫ້ມີປະສິດທິພາບ ແລະ ປົກປ້ອງສິດຜົນປະ�โຫຍດຂອງທັງສອງຝ່າຍ.

**ມາດຕາ 2: ເງື່ອນໄຂຂອງສັນຍາ**

ຝ່າຍ ກ ຕົກລົງແຕ່ງຕັ້ງ ແລະ ມອບສິດ ໃຫ້ຝ່າຍ ຂ ເປັນຕົວແທນ ແລະ ເປັນນາຍໜ້າໃຫ້ແກ່ຝ່າຍ ກ ໃນການຊື້-ຂາຍຫຼັກຊັບ ໂດຍຖືສັນຍາສະບັບນີ້ ເປັນໜັງສືມອບສິດໃຫ້ເຮັດທຸລະກຳຕາມສັນຍາສະບັບນີ້ ແລະ ຝ່າຍ ກ ຕົກລົງຈ່າຍຄ່າບໍລິການໃຫ້ແກ່ຝ່າຍ ຂ ຕາມລະບຽບການ.

ການມອບສິດ ຕາມວັກ 1 ຂອງມາດຕານີ້ ແມ່ນລວມເຖິງການມອບສິດໃຫ້ຝ່າຍ ຂ ເກັບຮັກສາ, ໂອນ, ຮັບໂອນ, ສົ່ງມອບ, ຮັບມອບ, ຖອນ ແລະ ແກ້ໄຂເງິນປັນຜົນ ຫຼື ຜົນປະ�โຫຍດອື່ນໆ ກ່ຽວກັບຫຼັກຊັບໃຫ້ແກ່ຝ່າຍ ຂ. ນອກຈາກນີ້ ການມອບສິດແມ່ນລວມເຖິງການຈອງຊື້ ຫຼື ໃຊ້ສິດໃນຫຼັກຊັບໃດໆ ໃຫ້ກັບຝ່າຍ ກ ຕາມສິດທີ່ຝ່າຍ ກ ມີຢູ່ໃນກໍລະນີທີ່ຝ່າຍ ຂ ພິຈາລະນາແລ້ວເຫັນວ່າເປັນການເຮັດເພື່ອຜົນປະ�โຫຍດຂອງຝ່າຍ ກ; ການຊຳລະຄ່າຊື້ຫຼັກຊັບ, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍອື່ນໆ ກ່ຽວກັບການຊື້-ຂາຍຫຼັກຊັບ. ການທີ່ຝ່າຍ ຂ ເຮັດທຸລະກຳໃດໆ ໃຫ້ແກ່ ຫຼື ແທນຝ່າຍ ກ ຕາມສັນຍາສະບັບນີ້ ຝ່າຍ ກ ຍອມຮັບໃຫ້ມີຜົນເທົ່າກັບເປັນການເຮັດດ້ວຍຕົນເອງ ໂດຍຝ່າຍ ກ ຈະບໍ່ປະຕິເສດຄວາມຮັບຜິດຊອບ ແລະ ຈະບໍ່ໂຕ້ແຍ້ງ ຫຼື ຄັດຄ້ານ.

**ມາດຕາ 3: ຮູບແບບການຊື້-ຂາຍຫຼັກຊັບ**

ການຊື້-ຂາຍຫຼັກຊັບ ມີສອງຮູບແບບຄື: (1) ການຊື້-ຂາຍຫຼັກຊັບທາງກົງ ແລະ (2) ການຊື້-ຂາຍຫຼັກຊັບທາງອ້ອມ.

**ມາດຕາ 4: ການຊື້-ຂາຍຫຼັກຊັບທາງກົງ**

ການຊື້-ຂາຍຫຼັກຊັບທາງກົງ ແມ່ນການຊື້-ຂາຍຫຼັກຊັບ ທີ່ຝ່າຍ ກ ອອກຄຳສັ່ງຊື້-ຂາຍຫຼັກຊັບໃຫ້ແກ່ ຝ່າຍ ຂ ຢ່າງ ເປັນລາຍລັກອັກສອນໂດຍການປະກອບແບບຟອມໃບຄຳສັ່ງຊື້-ຂາຍຕາມການກຳນົດຂອງຝ່າຍ ຂ.

**ມາດຕາ 5: ການຊື້-ຂາຍຫຼັກຊັບທາງອ້ອມ**

ການຊື້-ຂາຍຫຼັກຊັບທາງອ້ອມ ແມ່ນການຊື້-ຂາຍຫຼັກຊັບ ທີ່ຝ່າຍ ກ ອອກຄຳສັ່ງຊື້-ຂາຍຫຼັກຊັບໃຫ້ຝ່າຍ ຂ ໂດຍຜ່ານການນຳໃຊ້ເຄື່ອງມືເຕັກນິກສື່ສານ ເຊັ່ນ: ໂທລະສັບ, ອິນເຕີເນັດ ແລະ ເຄື່ອງມືຊື່ສານອື່ນໆ ຕາມການກຳນົດຂອງຝ່າຍ ຂ.

**ມາດຕາ 6: ຂັ້ນຕອນການສົ່ງ ຮັບຄຳສັ່ງຊື້-ຂາຍຫຼັກຊັບທາງກົງ**

1. ຝ່າຍ ກ ທີ່ມີຈຸດປະສົງຊື້-ຂາຍຫຼັກຊັບທາງກົງ ຕ້ອງຕື່ມຂໍ້ມູນໃສ່ແບບຟອມໃບຄຳສັ່ງຊື້-ຂາຍໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມການກຳນົດຂອງ ຝ່າຍ ຂ. ພາຍຫຼັງຕື່ມຂໍ້ມູນໃສ່ແບບຟອມໃບຄຳສັ່ງສຳເລັດແລ້ວ ຝ່າຍ ກ ຕ້ອງສົ່ງໃຫ້ຝ່າຍ ຂ ເພື່ອປ້ອນຂໍ້ມູນເຫຼົ່ານັ້ນ ໃສ່ລະບົບຊື້-ຂາຍຂອງຕະຫຼາດ;
2. ພະນັກງານຂອງຝ່າຍ ຂ ຈະກວດກາເບິ່ງຄວາມຖືກຕ້ອງຂອງແບບຟອມຄຳສັ່ງຂອງຝ່າຍ ກ ແລະ ເຊັນຢັ້ງຢືນ;
3. ອີງຕາມສັນຍາສະບັບນີ້ ແບບຟອມໃບຄຳສັ່ງທີ່ມີລາຍເຊັນທັງສອງຝ່າຍ ຖືວ່າມີຜົນບັງຄັບໃຊ້;
4. ຝ່າຍ ກ ສາມາດຊື້-ຂາຍຫຼັກຊັບທາງກົງ ໂດຍການມອບສິດຢ່າງເປັນລາຍລັກອັກສອນໃຫ້ຝ່າຍ ຂ ຫຼື ບຸກຄົນທີສາມ. ໃນກໍລະນີນີ້ ລາຍເຊັນຂອງຜູ້ໄດ້ຮັບມອບສິດຈາກຝ່າຍ ກ ຢູ່ໃນແບບຟອມຄຳສັ່ງ ຖືວ່າເປັນຄຳສັ່ງຊື້-ຂາຍ ຂອງຝ່າຍ ກ.



ເຊັນບ່ອນນີ້ ⇨ _____

**ມາດຕາ 7: ຂັ້ນຕອນການສົ່ງ ຮັບຄຳສັ່ງຊື້-ຂາຍຫຼັກຊັບທາງອ້ອມ**

1. ຝ່າຍ ກ ທີ່ມີຈຸດປະສົງຊື້-ຂາຍຫຼັກຊັບທາງອ້ອມ ຕ້ອງສະເໜີຄຳສັ່ງຊື້-ຂາຍຫຼັກຊັບຂອງຕົນຜ່ານທາງໂທລະສັບ, ອິນເຕີເນັດ ແລະ ວິທີການອື່ນໆ ຕາມການກຳນົດຂອງຝ່າຍ ຂ.
2. ພະນັກງານ/ລະບົບຂອງຝ່າຍ ຂ ຈະປະຕິບັດຄຳສັ່ງຂອງຝ່າຍ ກ ພາຍຫຼັງພະນັກງານຂອງຝ່າຍ ຂ ໄດ້ຮັບຂໍ້ມູນຈາກຝ່າຍ ກ ທີ່ເຫັນວ່າຖືກຕ້ອງ;
3. ການຊື້-ຂາຍຫຼັກຊັບທາງອ້ອມ ໂດຍຜ່ານທາງໂທລະສັບ, ອິນເຕີເນັດ ແລະ ວິທີການອື່ນໆ ຕາມການກຳນົດຂອງຝ່າຍ ຂ ແລະ ຝ່າຍ ກ ຕົກລົງມອບສິດໃຫ້ພະນັກງານຂອງຝ່າຍ ຂ ປະຕິບັດຄຳສັ່ງຊື້-ຂາຍ ແລະ ລົງລາຍເຊັນໃບແບບຟອມຄຳສັ່ງຕາມການມອບໝາຍຂອງຝ່າຍ ກ ແລະ ຝ່າຍ ກ ຍອມຮັບຜົນການຊື້-ຂາຍຫຼັກຊັບທັງໝົດທີ່ເກີດຈາກການມອບສິດດັ່ງກ່າວ ໃນທຸກກໍລະນີ.

**ມາດຕາ 8: ການບັນທຶກຄຳສັ່ງຊື້-ຂາຍຫຼັກຊັບ**

ໃນເວລາຮັບຄຳສັ່ງຊື້-ຂາຍຫຼັກຊັບຈາກຝ່າຍ ກ, ຝ່າຍ ຂ ຕ້ອງບັນທຶກຢ່າງເປັນລາຍລັກອັກສອນ ຫຼື ບັກທຶກສຽງ ແລະ ວິທີການອື່ນໆ ເພື່ອນຳໃຊ້ເປັນສິ່ງຢັ້ງຢືນຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ. ການບັນທຶກດັ່ງກ່າວ ຝ່າຍ ຂ ຕ້ອງເກັບຮັກສາໄວ້ເປັນເວລາ 5 ປີ.

**ມາດຕາ 9: ຜົນສັກສິດຂອງຄຳສັ່ງຊື້-ຂາຍຫຼັກຊັບ**

ທຸກຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ ລວມທັງຄຳສັ່ງດ້ວຍວາຈາ ຫຼື ເປັນລາຍລັກອັກສອນ ຫຼື ທາງໂທລະສັບ, ອິນເຕີເນັດ ແລະ ດ້ວຍວິທີການອື່ນໆ ຕາມການກຳນົດຂອງຝ່າຍ ຂ ພາຍ ຫຼັງຝ່າຍ ຂ ໄດ້ຮັບຊາບຄຳສັ່ງນັ້ນຢ່າງຊັດເຈນ ປັດສະຈາກຂໍ້ສົງໃສແລ້ວຖືວ່າເປັນຄຳສັ່ງທີ່ຖືກຕ້ອງຂອງຝ່າຍ ກ ແລະ ໃນທຸລະກຳນີ້ ຝ່າຍ ກ ຕ້ອງຍອມຮັບຜົນຂອງຄຳສັ່ງດັ່ງກ່າວເໝືອນກັບວ່າຝ່າຍ ກ ໄດ້ເຮັດທຸລະກຳນັ້ນດ້ວຍຕົນເອງທຸກປະການ.

**ມາດຕາ 10: ການແຈ້ງຜົນການຊື້-ຂາຍຫຼັກຊັບ**

ຝ່າຍ ຂ ຕ້ອງແຈ້ງຜົນການຊື້-ຂາຍຫຼັກຊັບໃຫ້ແກ່ຝ່າຍ ກ ຫຼື ຜູ້ຕາງໜ້າຊາບພາຍຫຼັງການຈັບຄູ່ຊື້-ຂາຍສຳເລັດ ຊຶ່ງລວມມີຂໍ້ມູນດັ່ງນີ້: (1) ລາຄາ, ຈຳນວນ, ວັນທີຊຳລະ, ຄ່າທຳນຽມນາຍໜ້າ ແລະ ອື່ນໆ ໂດຍຜ່ານທາງໄປສະນີ, ໂທລະສັບ, ອິນເຕີເນັດ ແລະ ຜ່ານເຄື່ອງມືສື່ສານອື່ນໆ ຕາມການກຳນົດຂອງຝ່າຍ ຂ. ໃນກໍລະນີຝ່າຍ ກ ບໍ່ຕ້ອງການຂໍ້ມູນທີ່ລະບຸໄວ້ໃນມາດຕານີ້ ຝ່າຍ ຂ ບໍ່ມີພັນທະແຈ້ງໃຫ້ຝ່າຍ ກ ຊາບ.

**ມາດຕາ 11: ການຍົກເລີກ ຫຼືປ່ຽນແປງຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ**

ການຍົກເລີກ ຫຼື ປ່ຽນແປງຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ ທັງໝົດ ຫຼື ບາງສ່ວນ ຝ່າຍ ກ ຕ້ອງແຈ້ງໃຫ້ຝ່າຍ ຂ ຊາບກ່ອນຄຳສັ່ງຊື້-ຂາຍຂອງຝ່າຍ ກ ຖືກຈັດຕັ້ງປະຕິບັດສຳເລັດ. ການຍົກເລີກ ຫຼື ປ່ຽນແປງຄຳສັ່ງດັ່ງກ່າວ ຈະມີຜົນສັກສິດກໍຕໍ່ເມື່ອຝ່າຍ ກ ໄດ້ຮັບແຈ້ງຢືນຢັນຈາກຝ່າຍ ຂ ເທົ່ານັ້ນ. ການຍົກເລີກ ຫຼື ການປ່ຽນແປງດັ່ງກ່າວ ຈະບໍ່ມີຜົນກະທົບ ຕໍ່ທຸລະກຳຕ່າງໆ ທີ່ຝ່າຍ ຂ ໄດ້ປະຕິບັດກ່ອນການຍົກເລີກ ຫຼື ປ່ຽນແປງຄຳສັ່ງຊື້-ຂາຍໄດ້ຮັບການຢືນຢັນ.

**ມາດຕາ 12: ການຊຳລະເງິນໃນການຊື້-ຂາຍຫຼັກຊັບ**

1. ຝ່າຍ ກ ຕ້ອງມີບັນຊີເງິນຝາກຢູ່ທະນາຄານຕົວແທນຂອງຝ່າຍ ຂ ເພື່ອຮອງຮັບການຊຳລະຊື້-ຂາຍຫຼັກຊັບ. ບັນຊີເງິນຝາກດັ່ງກ່າວ ຕ້ອງແມ່ນບັນຊີເງິນຝາກກະແສລາຍວັນ ຫຼື ບັນຊີເງິນຝາກປະຢັດ ຫຼື ບັນຊີປະເພດອື່ນໆ ຕາມການກຳນົດຂອງ ສຳນັກງານ ຄຄຊ.
2. ກໍລະນີຝ່າຍ ກ ສົ່ງຄຳສັ່ງຊື້ຫຼັກຊັບຜ່ານຝ່າຍ ຂ, ຝ່າຍ ກ ຕ້ອງໂອນເງິນໃຫ້ຄົບຖ້ວນຕາມມູນຄ່າຫຼັກຊັບທີ່ຝ່າຍ ກ ສັ່ງຊື້ເຂົ້າບັນຊີເງິນຝາກຂອງຝ່າຍ ຂ (ບັນຊີເພື່ອລູກຄ້າ) ກ່ອນສົ່ງຄຳສັ່ງຊື້. ໃນກໍລະນີ ຄຳສັ່ງຊື້ຂອງຝ່າຍ ກ ບໍ່ປະສົບຜົນສຳເລັດທັງໝົດ ຫຼື ບາງສ່ວນ ແລະ ຝ່າຍ ກ ຕ້ອງການຖອນເງິນສ່ວນທີ່ເຫຼືອຄືນ ແມ່ນໃຫ້ຝ່າຍ ກ ໄປພົວພັນກັບທະນາຄານຕົວແທນຂອງຝ່າຍ ຂ ດ້ວຍຕົນເອງເລີຍ.
3. ກໍລະນີຝ່າຍ ກ ສົ່ງຄຳສັ່ງຂາຍຫຼັກຊັບຜ່ານຝ່າຍ ຂ ຖ້າວ່າຄຳສັ່ງດັ່ງກ່າວສຳເລັດ ເງິນທີ່ໄດ້ຈາກການຂາຍຈະຖືກໂອນເຂົ້າບັນຊີເງິນຝາກຂອງຝ່າຍ ຂ (ບັນຊີເພື່ອລູກຄ້າ) ພາຍໃນເວລາ T+2. ຖ້າຝ່າຍ ກ ຕ້ອງການຖອນເງິນດັ່ງກ່າວ ໃຫ້ຝ່າຍ ກ ໄປພົວພັນກັບທະນາຄານຕົວແທນຂອງຝ່າຍ ຂ ດ້ວຍຕົນເອງເລີຍ.
4. ຝ່າຍ ກ ຕົກລົງແຕ່ງຕັ້ງ ແລະ ມອບໝາຍສິດໃຫ້ຝ່າຍ ຂ ໃນການເບີກຖອນ ຫຼື ອາຍັດເງິນໃນບັນຊີຂອງຝ່າຍ ກ ເພື່ອຊຳລະໜີ້ສິນຕ່າງໆ ທີ່ຝ່າຍ ກ ມີຕໍ່ຝ່າຍ ຂ ໂດຍບໍ່ມີເງື່ອນໄຂ ແລະ ຂໍ້ໂຕ້ແຍ້ງໃດໆ ໃນກໍລະນີ ຝ່າຍ ກ ໄດ້ສັ່ງໃຫ້ຝ່າຍ ຂ ເຮັດທຸລະກຳເພື່ອຜົນປະໂຫຍດຂອງຝ່າຍ ກ ຕາມລະບຽບຂອງຝ່າຍ ຂ.
5. ໃນກໍລະນີຝ່າຍ ກ ເສຍຊີວິດ ຫຼື ກາຍເປັນຄົນບໍ່ມີຄວາມສາມາດ ຫຼື ຄ້ອຍຄືບໍ່ມີຄວາມສາມາດ ຫຼື ຖືກຮ້ອງຟ້ອງດຳເນີນຄະດີ ຫຼື ກໍລະນີອື່ນໆ ເມື່ອຝ່າຍ ຂ ເຫັນເປັນການສົມຄວນເພື່ອປົກປ້ອງຜົນປະໂຫຍດຂອງຝ່າຍ ຂ, ຝ່າຍ ກ ຕົກລົງ ແລະ ຍິນຍອມໃຫ້ຝ່າຍ ຂ ຂາຍຫຼັກຊັບ ຫຼື ຊັບສິນ ຫຼື ສິດອື່ນໆ ຂອງຝ່າຍ ກ ທີ່ຢູ່ໃນການຄອບຄອງ ຂອງຝ່າຍ ຂ ທັງໝົດ ຫຼື ບາງສ່ວນໄດ້ທັນທີ ເພື່ອຊຳລະໜີ້ຄ້າງຊຳລະທີ່ຝ່າຍ ກ ມີຕໍ່ຝ່າຍ ຂ ແລະ ຊື້ຫຼັກຊັບທັງໝົດ ຫຼື ບາງສ່ວນເພື່ອທົດແທນຫຼັກຊັບທີ່ຝ່າຍ ກ ໄດ້ສັ່ງໃຫ້ຝ່າຍ ຂ ຂາຍໄປແລ້ວ ແຕ່ຝ່າຍ ກ ຍັງບໍ່ທັນໄດ້ສົ່ງມອບຫຼັກຊັບໃຫ້ຝ່າຍ ຂ. ນອກຈາກນີ້ ຝ່າຍ ຂ ສາມາດຕັດສິນປົດບັນຊີຂອງຝ່າຍ ກ.

**ມາດຕາ 13: ການສົ່ງ ມອບຫຼັກຊັບ**

ເມື່ອມີການຊື້-ຂາຍຫຼັກຊັບ ຕ້ອງສົ່ງມອບຫຼັກຊັບດັ່ງນີ້:

1. ໃນກໍລະນີຝ່າຍ ກ ໄດ້ສົ່ງຄຳສັ່ງຊື້ຫຼັກຊັບ ໂດຍຜ່ານຝ່າຍ ຂ ແລ້ວຄຳສັ່ງດັ່ງກ່າວປະສົບຜົນສຳເລັດ, ຝ່າຍ ກ ຈະໄດ້ຮັບຫຼັກຊັບເຂົ້າບັນຊີຫຼັກຊັບຂອງຕົນ ພາຍໃນວັນທີ່ມີການຊຳລະຄ່າຊື້ຫຼັກຊັບດັ່ງກ່າວ (T+2).
2. ໃນກໍລະນີ ຝ່າຍ ຂ ໂອນຫຼັກຊັບຜ່ານບັນຊີຝາກຫຼັກຊັບທີ່ສູນຮັບຝາກຫຼັກຊັບໃຫ້ຝ່າຍ ກ ຫຼື ຝ່າຍ ຂ ໄດ້ເກັບຮັກສາຫຼັກຊັບທີ່ຝ່າຍ ກ ມອບໝາຍໃຫ້ຊື້ ແລະ ເກັບໄວ້ກັບຝ່າຍ ຂ ຕາມຄຳສັ່ງຂອງຝ່າຍ ກ ໃຫ້ຖືວ່າຝ່າຍ ຂ ໄດ້ສົ່ງມອບຫຼັກຊັບໃຫ້ແກ່ຝ່າຍ ກ ຕາມລະບຽບການແລ້ວ.
3. ໃນກໍລະນີ ຝ່າຍ ກ ສັ່ງຂາຍຫຼັກຊັບຜ່ານຝ່າຍ ຂ, ຫຼັກຊັບຂອງຝ່າຍ ຂ ຈະຖືກໂອນໄປໃຫ້ບັນຊີຂອງຜູ້ຊື້ ພາຍໃນວັນ ແລະ ເວລາທີ່ຕະຫຼາດຫຼັກຊັບ ຫຼື ຝ່າຍ ຂ ກຳນົດ. ໃນກໍລະນີຝ່າຍ ກ ໂອນຫຼັກຊັບຜ່ານບັນຊີຝາກຫຼັກຊັບທີ່ສູນຮັບຝາກຫຼັກຊັບຈັດໄວ້ເພື່ອການຝາກ ຖອນ ຫຼື ໂອນຫຼັກຊັບໃຫ້ແກ່ຝ່າຍ ຂ ຫຼື ຝ່າຍ ກ ໄດ້ມີຄຳສັ່ງໃຫ້ຝ່າຍ ຂ ສົ່ງມອບຫຼັກຊັບຈາກຫຼັກຊັບຂອງຝ່າຍ ກ ທີ່ເກັບຮັກສາໄວ້ກັບຝ່າຍ ຂ ນັ້ນ ໃຫ້ຖືວ່າຝ່າຍ ກ ໄດ້ສົ່ງມອບຫຼັກຊັບໃຫ້ຝ່າຍ ຂ ຕາມລະບຽບການແລ້ວ.
4. ໃນກໍລະນີຝ່າຍ ກ ມີຫຼັກຊັບເກັບຮັກສາໄວ້ກັບຝ່າຍ ຂ (ໝາຍເຖິງຫຼັກຊັບຂອງຝ່າຍ ກ ທີ່ຝ່າຍ ຂ ນຳໄປຝາກໄວ້ກັບສູນຮັບຝາກຫຼັກຊັບ) ຝ່າຍ ກ ຍິນຍອມໃຫ້ຝ່າຍ ຂ ສາມາດນຳຫຼັກຊັບທີ່ເກັບຮັກສາໄວ້ນັ້ນມາສົ່ງມອບໄດ້).

**ມາດຕາ 14: ສິດ ຂອງຝ່າຍ ກ**

ອີງຕາມສັນຍາສະບັບນີ້ ຝ່າຍ ກ ມີສິດ ດັ່ງນີ້:

1. ສົ່ງຄຳສັ່ງຊື້-ຂາຍຫຼັກຊັບໂດຍຜ່ານ ຝ່າຍ ຂ;
2. ຮັບໃບແຈ້ງຜົນການເຄື່ອນໄຫວບັນຊີຫຼັກຊັບ ແລະ ຍອດເງິນໃນບັນຊີຫຼັກຊັບຈາກຝ່າຍ ຂ ເມື່ອຕ້ອງການ;
3. ມີສິດຊື້-ຂາຍຫຼັກຊັບ ໂດຍສອດຄ່ອງກັບດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ;
4. ຝ່າຍ ກ ຕ້ອງຮັບຮູ້ລະບຽບການທີ່ກ່ຽວຂ້ອງຕ່າງໆ ລວມເຖິງຂໍ້ກຳນົດ ແລະ ເງື່ອນໄຂໃນການຊື້-ຂາຍຫຼັກຊັບຂອງບໍລິສັດ ແລະ ຮັບຊາບວ່າເປັນໜ້າທີ່ຂອງຝ່າຍ ກ ຕ້ອງທຳຄວາມເຂົ້າໃຈ ແລະ ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງຕ່າງໆ, ຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ທີ່ບໍລິສັດຈະປະກາດໃຊ້ໃນຕໍ່ໜ້າ; ປະຕິບັດຢ່າງຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
5. ຂໍຜົນການວິເຄາະ ແລະ ຂໍ້ມູນທີ່ປະຕິບັດໂດຍຜະແນກວິເຄາະຫຼັກຊັບຂອງຝ່າຍ ຂ ຕາມຄວາມອາດສາມາດຂອງ ຝ່າຍ ຂ;
6. ມີສິດທວງຖາມຜັນທະຕ່າງໆທີ່ຝ່າຍ ຂ ມີຕໍ່ຝ່າຍ ກ.



ເຊັນບ່ອນນີ້ ⇨ _____

**<u>ມາດຕາ 15</u>: ພັນທະຂອງຝ່າຍ ກ**

ອີງຕາມສັນຍາສະບັບນີ້ ຝ່າຍ ກ ມີພັນທະຕໍ່ຝ່າຍ ຂ ດັ່ງນີ້:

1. ສະໜອງຂໍ້ມູນທີ່ຖືກຕ້ອງ ແລະ ຄົບຖ້ວນໃຫ້ແກ່ຝ່າຍ ຂ. ໃນກໍລະນີຝ່າຍ ກ ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ຄົບຖ້ວນ ຝ່າຍ ກ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງດັ່ງກ່າວ;
2. ຝ່າຍ ກ ຕ້ອງມີບັນຊີເງິນຝາກຢູ່ທະນາຄານຕົວແທນຂອງຝ່າຍ ຂ ເພື່ອຮອງຮັບການຊຳລະການຊື້-ຂາຍຫຼັກຊັບ. ບັນຊີເງິນຝາກດັ່ງກ່າວ ຕ້ອງແມ່ນບັນຊີເງິນຝາກກະແສລາຍວັນ ຫຼື ບັນຊີເງິນຝາກປະຢັດ ຫຼື ບັນຊີເງິນຝາກປະເພດ ອື່ນໆ ຕາມການກຳນົດຂອງສຳນັກງານ ຄລຕ ໃນແຕ່ລະໄລຍະ;
3. ສະໜອງເອກະສານຕ່າງໆ ທີ່ຈຳເປັນຕາມການສະເໜີຂອງຝ່າຍ ຂ;
4. ຝ່າຍ ກ ຍິນດີມອບສິດ ແລະ ແຕ່ງຕັ້ງໃຫ້ຝ່າຍ ຂ ໃນການດຳເນີນທຸລະກຳຕ່າງໆ ເຊັ່ນ: ການສະເໜີ ຂໍອະນຸຍາດຕ່າງໆ ແລະ ການປະກອບເອກະສານ ເພື່ອອຳນວຍຄວາມສະດວກໃນການຂາຍຮຸ້ນ (ຫຼັກຊັບ) ຂອງຕົນ ໂດຍຝ່າຍ ກ ຍິນດີຮັບຜິດຊອບຈ່າຍຄ່າທຳນຽມຕ່າງໆ ຕາມລະບຽບການ;
5. ຊຳລະຄ່າຫຼັກຊັບຕາມມູນຄ່າທີ່ຝ່າຍ ກ ສົ່ງຄຳສັ່ງຊື້ຜ່ານຝ່າຍ ຂ;
6. ຊຳລະຄ່າທຳນຽມ, ຄ່າບໍລິການຊື້-ຂາຍຫຼັກຊັບ ແລະ ຄ່າບໍລິການອື່ນໆ (ຖ້າມີ) ສຳລັບການບໍລິການທີ່ຝ່າຍ ຂ ສະໜອງໃຫ້;
7. ຮັບປະກັນໃຫ້ມີຫຼັກຊັບພຽງພໍໃນບັນຊີຫຼັກຊັບຂອງຕົນກ່ອນອອກຄຳສັ່ງຂາຍຫຼັກຊັບ ແລະ ມີເງິນໃນບັນຊີທະນາຄານ ພຽງພໍເພື່ອຊຳລະຄ່າຫຼັກຊັບ ແລະ ຄ່າທຳນຽມຕ່າງໆ ທີ່ເກີດຈາກການນຳໃຊ້ບໍລິການຊື້-ຂາຍຫຼັກຊັບທຸກຄັ້ງ;
8. ຍອມຮັບຜົນການຊື້-ຂາຍຫຼັກຊັບທີ່ຝ່າຍ ຂ ໄດ້ປະຕິບັດຕາມສຳສັ່ງຂອງຝ່າຍ ກ;
9. ໃນກໍລະນີຝ່າຍ ກ ເຫັນວ່າມີການສົ່ງຄຳສັ່ງຊື້-ຂາຍຫຼັກຊັບຜິດພາດ ຫຼື ບໍ່ຖືກຕ້ອງ ຝ່າຍ ກ ຕ້ອງແຈ້ງໃຫ້ ຝ່າຍ ຂ ຊາບພາຍໃນວັນທີ່ມີການຊື້-ຂາຍຫຼັກຊັບ ຖ້າບໍ່ດັ່ງນັ້ນ ຝ່າຍ ຂ ຈະຖືວ່າ ຝ່າຍ ກ ຍອມຮັບຄຳສັ່ງຊື້-ຂາຍ ແລະ ຄຳສັ່ງຊື້-ຂາຍດັ່ງກ່າວ ເປັນຄຳສັ່ງຊື້-ຂາຍທີ່ຖືກຕ້ອງ;
10. ຝ່າຍ ກ ຍອມຮັບວ່າ ທຸກການຊື້-ຂາຍຫຼັກຊັບທີ່ເກີດຈາກຄຳສັ່ງຊື້-ຂາຍຂອງລູກຄ້າ ຖືວ່າເປັນການຕັດສິນໃຈຂອງລູກຄ້າທັງໝົດ. ຂໍ້ມູນຂ່າວສານ ຫຼື ການແນະນຳໃດໆ ກ່ຽວກັບການຊື້-ຂາຍຫຼັກຊັບ ຈາກພະນັກງານຄົນໃດຄົນໜຶ່ງຂອງ ຝ່າຍ ຂ ຖືວ່າບໍ່ແມ່ນພາລະຜູກພັນຂອງຝ່າຍ ຂ ແລະ ຝ່າຍ ຂ ບໍ່ມີຄວາມຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ ເວັ້ນແຕ່ເປັນການຈົງໃຈ ຫຼື ຄວາມປະໝາດຂອງຝ່າຍ ຂ ຫຼື ເປັນການຂັດຕໍ່ລະບຽບທີ່ກ່ຽວຂ້ອງ;
11. ຍິນຍອມໃຫ້ຝ່າຍ ຂ ເຂົ້າເປັນສະມາຊິກຂອງສູນຮັບຝາກຫຼັກຊັບຕາມກົດໝາຍ, ດຳລັດ ແລະ ລະບຽບການຕ່າງໆ ກ່ຽວກັບຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຫຼື ຕາມກົດໝາຍອື່ນໆ ໄດ້ປະກາດໃຊ້ ແລະ ໃຊ້ບໍລິການຕ່າງໆ ຂອງສູນຮັບຝາກຫຼັກຊັບດັ່ງກ່າວໃນສ່ວນທີ່ກ່ຽວຂ້ອງກັບຫຼັກຊັບຂອງຝ່າຍ ກ. ຝ່າຍ ກ ເຫັນດີໃຫ້ຝ່າຍ ຂ ປະຕິບັດຕາມຫຼັກການ, ເງື່ອນໄຂ, ວິທີການຕະຫຼອດຮອດແນວທາງປະຕິບັດຂອງສູນຮັບຝາກຫຼັກຊັບໄດ້ທຸກປະການເຊັ່ນ: ຕົກລົງໃຫ້ບໍລິສັດເປີດເຜີຍຊື່, ທີ່ຢູ່ ແລະ ລາຍລະອຽດອື່ນໆ ກ່ຽວກັບຝ່າຍ ກ ເພື່ອໃຫ້ສູນຮັບຝາກຫຼັກຊັບຮັບຊາບ;
12. ຝ່າຍ ກ ຂໍຮັບຮອງວ່າຂໍ້ມູນຕ່າງໆ ທີ່ແຈ້ງໃຫ້ແກ່ຝ່າຍ ຂ ເປັນຂໍ້ມູນທີ່ຖືກຕ້ອງ ແລະ ຄົບຖ້ວນທຸກປະການ.
13. ໃນກໍລະນີຝ່າຍ ກ ມີການປ່ຽນແປງທີ່ຢູ່, ທີ່ຢູ່ອີເມວ, ໝາຍເລກໂທລະສັບ ຫຼື ຂໍ້ມູນທີ່ສຳຄັນອື່ນໆ ທີ່ມີຜົນຕໍ່ການຈັດຕັ້ງປະຕິບັດສັນຍາສະບັບນີ້ ຝ່າຍ ກ ຕ້ອງແຈ້ງໃຫ້ ຝ່າຍ ຂ ຊາບທັນທີ. ຖ້າຂໍ້ມູນໃດທີ່ຝ່າຍ ກ ແຈ້ງໃຫ້ຝ່າຍ ຂ ເປັນຂໍ້ມູນທີ່ບໍ່ຖືກຕ້ອງເຊິ່ງມີຜົນກະທົບດ້ານລົບຕໍ່ສັນຍາສະບັບນີ້ ໃຫ້ໝາຍເຫດ້ານ້ຂອງຝ່າຍ ກ ເຖິງກຳນົດຊຳລະທັນທີ ແລະ ຖືວ່າລູກຄ້າຜິດສັນຍາ;
14. ການແຈ້ງ, ການບອກກ່າວ ຫຼື ການທວງຖາມໃດໆ ທີ່ຝ່າຍ ຂ ໄດ້ເຮັດໜັງສືສົ່ງໄປຍັງສະຖານທີ່ຢູ່ຂອງຝ່າຍ ກ ທີ່ໄດ້ລະບຸໄວ້ ຫຼື ທາງອີເມວຕາມຝ່າຍ ກ ໄດ້ແຈ້ງໄວ້ກັບຝ່າຍ ຂ, ຝ່າຍ ກ ຍິນຍອມໃຫ້ຖືວ່າມີການບອກກ່າວ ຫຼືໄດ້ຮັບແຈ້ງໂດຍຖືກຕ້ອງແລ້ວ ເຖິງວ່າຝ່າຍ ກ ໄດ້ຮັບແຈ້ງດ້ວຍຕົນເອງ ຫຼືຜູ້ອື່ນຮັບໄວ້ແທນກໍຕາມ.

**<u>ມາດຕາ 16</u>: ສິດຂອງຝ່າຍ ຂ**

ອີງຕາມສັນຍາສະບັບນີ້ ຝ່າຍ ຂ ມີສິດປະຕິເສດການປະຕິບັດຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ ເມື່ອເຫັນວ່າຄຳສັ່ງດັ່ງກ່າວ ເປັນການລະເມີດລະບຽບກົດໝາຍທີ່ກ່ຽວຂ້ອງ ຫຼື ກົດລະບຽບຂອງບໍລິສັດ. ສ່ວນຄ່າເສຍຫາຍທີ່ເກີດຂຶ້ນຈາກຄຳສັ່ງດັ່ງກ່າວ ຝ່າຍ ກ ບໍ່ມີສິດຮຽກຮ້ອງຄ່າເສຍຫາຍຈາກຝ່າຍ ຂ.

**<u>ມາດຕາ 17</u>: ພັນທະຂອງຝ່າຍ ຂ**

ອີງຕາມສັນຍາສະບັບນີ້ ຝ່າຍ ຂ ມີພັນທະຕໍ່ຝ່າຍ ກ ດັ່ງນີ້:

1. ປະຕິບັດຄຳສັ່ງຊື້-ຂາຍທັງໝົດ ທີ່ຝ່າຍ ກ ສະເໜີມາໂດຍສອດຄ່ອງກັບເງື່ອນໄຂ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຮັກສາຄວາມລັບຂອງລູກຄ້າ ເຊັ່ນ: ຫຼັກຊັບ ແລະ ເງິນໃນບັນຊີຫຼັກຊັບ, ຂໍ້ມູນການຊື້-ຂາຍຫຼັກຊັບ ຍົກເວັ້ນຕາມການກຳນົດຂອງກົດໝາຍ ຫຼື ລະບຽບການໃນແຕ່ລະໄລຍະ;
3. ແຈ້ງໃຫ້ຝ່າຍ ກ ຊາບກ່ຽວກັບຄວາມຜິດພາດໃນການຢັ້ງຢືນການຊື້-ຂາຍໃຫ້ໄວທີ່ສຸດ (ພາຍໃນມື້ ຫຼື ໃນວັນຕໍ່ມາພາຍຫຼັງການຢັ້ງຢືນຄຳສັ່ງຊື້-ຂາຍທີ່ບໍ່ຖືກຕ້ອງ);
4. ທົດແທນຄ່າເສຍຫາຍຈາກການຊື້-ຂາຍທັງໝົດທີ່ເກີດຈາກຄວາມຜິດພາດຂອງຝ່າຍ ຂ ໃຫ້ແກ່ຝ່າຍ ກ;
5. ລາຍງານຜົນການຊື້-ຂາຍຫຼັກຊັບ (ຖ້າຄຳສັ່ງຊື້-ຂາຍໄດ້ຮັບການຈັບຄູ່ທັງໝົດ ຫຼື ບາງສ່ວນ) ໃຫ້ຝ່າຍ ກ ຊາບຢ່າງເປັນລາຍລັກອັກສອນ ໂດຍສົ່ງໄປຍັງສະຖານທີ່ທີ່ຝ່າຍ ກ ໄດ້ລະບຸໄວ້ ຫຼື ທາງໂທລະສັບ ຫຼື ທາງອີເລັກໂຕຣນິກ ອື່ນໆ ຕາມທີ່ຝ່າຍ ກ ໄດ້ແຈ້ງໄວ້ກັບຝ່າຍ ຂ ຕາມຮູບແບບທີ່ຝ່າຍ ຂ ຫຼື ຕາມກົດລະບຽບກ່ຽວຂ້ອງກຳນົດ. ຖ້າຝ່າຍ ກ ບໍ່ຕ້ອງການລາຍງານດັ່ງກ່າວ ຝ່າຍ ຂ ກໍບໍ່ຈຳເປັນສົ່ງລາຍງານໃຫ້.
6. ຝ່າຍ ຂ ຈະບໍ່ຮັບຜິດຊອບຕໍ່ທຸກການສູນເສຍ ຫຼື ເສຍຫາຍທີ່ເກີດຂຶ້ນ ຍ້ອນກໍລະນີຕ່າງໆດຸ່ມນີ້:
   1) ເກີດຂຶ້ນຈາກການທີ່ຝ່າຍ ຂ ບໍ່ສາມາດປະຕິບັດຄຳສັ່ງຊື້-ຂາຍຂອງຝ່າຍ ກ ໄດ້ທັງໝົດ ຍ້ອນຄຳສັ່ງຊື້-ຂາຍ ຂອງຝ່າຍ ກ ບໍ່ຖືກຈັບຄູ່ຊື້-ຂາຍ;
   2) ເກີດຈາກຄວາມຜິດທີ່ເກີດຈາກບຸກຄົນທີສາມ ຊຶ່ງລວມມີແຕ່ບໍ່ຈຳກັດຄຸ່ຮ່ວມງານຂອງຝ່າຍ ຂ ໃນເວລາສະໜອງການບໍລິການຊື້-ຂາຍຫຼັກຊັບແບບອອນລາຍທາງໄກ;
   3) ເກີດຈາກຄວາມຜິດພາດຂອງລະບົບ IT ແລະ ທາງດ້ານເຕັກນິກໃດໜຶ່ງທີ່ກ່ຽວຂ້ອງ;
   4) ເກີດຈາກຝ່າຍ ຂ ປະຕິບັດຊັກຊ້າ ແລະ ບໍ່ສາມາດປະຕິບັດພາລະໜ້າທີ່ຂອງຕົນຕາມເງື່ອນໄຂ ແລະ ກົດລະບຽບ ຍ້ອນມີຄວາມຜິດພາດຂອງລະບົບ IT, ການຈັດສັນຂໍ້ມູນຂອງລະບົບ ແລະລະບົບການສື່ສານລົ້ມເຫຼວ;
   5) ບໍ່ສາມາດດຳເນີນການຊື້-ຂາຍໄດ້ ຍ້ອນຝ່າຍ ກ ສະໜອງຂໍ້ມູນໃຫ້ຊັກຊ້າ, ບໍ່ຄົບຖ້ວນ ແລະ ບໍ່ຖືກຕ້ອງ ຫຼື ຝ່າຍ ຂ ບໍ່ສາມາດຕິດຕໍ່ຫາຝ່າຍ ກ ໂດຍມີຂໍ້ມູນຢັ້ງຢືນວ່າຝ່າຍ ຂ ໄດ້ພະຍາຍາມຕິດຕໍ່ຜົວພັນຫາຝ່າຍ ກ.
   6) ຄ່າໃຊ້ຈ່າຍໃດໆ ທີ່ເກີດຂຶ້ນອັນເນື່ອງມາຈາກ ຫຼື ທີ່ກ່ຽວກັບສັນຍານີ້ ຫຼື ກ່ຽວກັບການກະທຳ ຫຼື ການຍົກເວັ້ນ ການກະທຳຂອງຝ່າຍ ກ ຫຼື ຕົວແທນຂອງຝ່າຍ ກ ລວມເຖິງບັນດາຄວາມເສຍຫາຍ ແລະ ຄ່າໃຊ້ຈ່າຍໃດໆ ທີ່ ຝ່າຍ ຂ ອາດໄດ້ຮັບອັນເນື່ອງມາຈາກການຮ້ອງຟ້ອງ ຫຼື ຮ້ອງຟ້ອງໂດຍບຸກຄົນອື່ນໃຫ້ຝ່າຍ ຂ ຮັບຜິດຊອບຕໍ່ສັນຍານີ້ ເຊິ່ງບໍ່ໄດ້ເກີດຂຶ້ນຈາກການກະທຳຂອງຝ່າຍ ຂ ແຕ່ປະການໃດ ຍົກເວັ້ນການກະທຳໂດຍຕັ້ງໃຈ ຫຼື ການປະມາດຂອງຝ່າຍ ຂ ຫຼື ຂອງພະນັກງານ ຫຼື ຂອງລູກຈ້າງ.
   7) ຄວາມເສຍຫາຍທີ່ເກີດຈາກອັກຄີໄຟ, ພະຍຸ, ການນັດຢຸດງານ, ການກໍ່ຄວາມບໍ່ສະຫງົບ, ການປະທ້ວງ, ສົງຄາມ, ການເຂົ້າຄວບຄຸມໂດຍອຳນາດລັດ, ຂໍ້ຜິດພາດໃນການຈັດສົ່ງຂໍ້ມູນ, ຂໍ້ຜິດພາດກ່ຽວກັບລະບົບເຄືອຂ່າຍການສື່ສານ ຫຼື ຄວາມຊັກຊ້າອັນເນື່ອງມາຈາກເຄືອຄ່າຍການສື່ສານຂອງບຸກຄົນພາຍນອກ ຫຼື ເຄືອຂ່າຍ ການສື່ສານຂອງລັດ, ອຸປະກອນເຄື່ອງໃຊ້ຂັດຂ້ອງ, ກະແສໄຟຟ້າຂັດຂ້ອງ ຫຼື ເຫດສຸດວິໄສທີ່ມີຜົນກະທົບຕໍ່ການດຳເນີນງານຂອງຝ່າຍ ຂ. ເຫດການດັ່ງກ່າວ ຕ້ອງບໍ່ເກີດຈາກຄວາມຕ້ອງໃຈ ຫຼື ຄວາມປະມາດຂອງຝ່າຍ ຂ ຫຼື ພະນັກງານ ຫຼື ລູກຈ້າງຂອງຝ່າຍ ຂ.

**<u>ມາດຕາ 18</u>: ຮູບການ ແລະອົງການແກ້ໄຂຂໍ້ຂັດແຍ່ງ**

ທຸກໆ ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນສັນຍາສະບັບນີ້ ຕ້ອງແກ້ໄຂໂດຍສັນຕິວິທີ ແລະ ສະເໝີພາບ. ໃນກໍລະນີຂໍ້ຂັດແຍ່ງທີ່ເກີດຂຶ້ນບໍ່ສາມາດແກ້ໄຂໄດ້ ທັງສອງຝ່າຍສາມາດສົ່ງຂໍ້ຂັດແຍ່ງດັ່ງກ່າວໄປໃຫ້ຕົວແທນທີ່ເປັນກຳມະການ ຫຼື ສົ່ງໄປທີ່ສຳນັກງານແກ້ໄຂຂໍ້ຂັດແຍ່ງ ເພື່ອແກ້ໄຂຕາມກົດໝາຍຂອງ ສປປ ລາວ.



ເຊັນບ່ອນນີ້ ⇨ _____

**<u>ມາດຕາ 19</u>: ການແຈ້ງກ່ຽວກັບການປ່ຽນແປງຂໍ້ມູນຂອງຝ່າຍ ກ**

ທຸກການປ່ຽນແປງຂໍ້ມູນ ຝ່າຍ ກ ຕ້ອງແຈ້ງໃຫ້ຝ່າຍ ຂ ຊາບ ແລະ ຈະຕ້ອງມອບສິ່ງດ້ວຍມື ຫຼື ສົ່ງທາງໄປສະນີລົງທະບຽນ, ອີເມວໄປຫາຫ້ອງການຈົດທະບຽນຂອງຝ່າຍສັນຍາທີ່ກ່ຽວຂ້ອງ.

**<u>ມາດຕາ 20</u>: ການຍົກເລີກການປະຕິບັດສັນຍາ**

ສັນຍາສະບັບນີ້ ຈະໄດ້ຮັບການຍົກເລີກໃນກໍລະນີດັ່ງຕໍ່ໄປນີ້:

1. ໄດ້ຮັບການເຫັນດີຢ່າງເປັນລາຍລັກອັກສອນຈາກທັງສອງຝ່າຍ;
2. ກໍລະນີຝ່າຍ ກ ສູນເສຍສິດທາງແພ່ງ ຫຼື ຝ່າຍ ຂ ສູນເສຍສະຖານະພາບດ້ານກົດໝາຍໃນການເປັນນິຕິບຸກຄົນເຊັ່ນ: ຍຸດເຊົາກິດຈະການ, ລົ້ມລະລາຍ ແລະ ອື່ນໆ.
3. ຝ່າຍໃດຝ່າຍໜຶ່ງບໍ່ສາມາດສືບຕໍ່ປະຕິບັດສັນຍາສະບັບນີ້ ເນື່ອງຈາກເຫດສຸດວິໄສ;
4. ຝ່າຍໃດຝ່າຍໜຶ່ງລະເມີດເງື່ອນໄຂໃນສັນຍາສະບັບນີ້ ແລະ ການຮັກສາສັນຍາສະບັບນີ້ ສ້າງຄວາມເສຍຫາຍຢ່າງຮ້າຍແຮງຕໍ່ຄູ່ສັນຍາ.

ຫາກຄູ່ສັນຍາຝ່າຍໃດຝ່າຍໜຶ່ງມີຈຸດປະສົງຍົກເລີກສັນຍາຕ້ອງແຈ້ງໃຫ້ຄູ່ສັນຍາຮັບຊາບຢ່າງເປັນລາຍລັກອັກສອນຊາບກ່ອນ 7 ວັນ. ການຍົກເລີກສັນຍານີ້ ບໍ່ກະທົບຕໍ່ສິດ ແລະ ໜ້າທີ່ຂອງຄູ່ສັນຍາທີ່ມີກ່ອນການຍົກເລີກສັນຍາສະບັບນີ້.

**<u>ມາດຕາ 21</u>: ໝາຍເຫດ**

1. ເມື່ອລົງລາຍເຊັນໃນສັນຍານີ້ແລ້ວ ຝ່າຍ ກ ຮັບຮູ້ວ່າລາຄາຂອງຫຼັກຊັບມີການເໜັງຕີງຂຶ້ນ ຫຼື ລົງຢູ່ສະເໝີ. ໃນບາງກໍລະນີຫຼັກຊັບອາດສູນເສຍຄຸນຄ່າທັງໝົດ. ຝ່າຍ ກ ຍອມຮັບວ່າ ການຊື້-ຂາຍຫຼັກຊັບມີຄວາມສ່ຽງ.
2. ເມື່ອລົງລາຍເຊັນໃນສັນຍານີ້ແລ້ວ ຝ່າຍ ກ ຮັບຮູ້ວ່າການສົ່ງຄຳສັ່ງຊື້-ຂາຍຫຼັກຊັບຜ່ານລະບົບອິນເຕີເນັດ ແລະ ໂທລະສັບ ມີຄວາມສ່ຽງຊຶ່ງອາດເກີດຈາກຄວາມຜິດພາດຂອງລະບົບ ແລະ ບຸກຄົນທີສາມ. ຝ່າຍ ກ ພ້ອມທີ່ຈະຮັບຄວາມສ່ຽງ ແລະ ການສູນເສຍທີ່ອາດເກີດຂຶ້ນຈາກການສົ່ງຄຳສັ່ງປະເພດນີ້ ເນື່ອງຈາກຄວາມຜິດພາດຂອງລະບົບ, ຂອງບຸກຄົນທີສາມ ແລະ ຈາກການກະທຳຂອງຝ່າຍ ກ ຊຶ່ງມີຜົນກະທົບຕໍ່ການເຄື່ອນໄຫວຊື້-ຂາຍຫຼັກຊັບ ຫຼື ການນຳໃຊ້ບັນຊີຊື້-ຂາຍຫຼັກຊັບຂອງຝ່າຍ ກ.
3. ເມື່ອລົງລາຍເຊັນໃນສັນຍານີ້ແລ້ວ ຝ່າຍ ກ ຮັບຮູ້ວ່າ ຝ່າຍ ຂ ໄດ້ແຈ້ງຕໍ່ຝ່າຍ ກ ຮັບຊາບ ກ່ຽວກັບໜ້າທີ່, ໃບອະນຸຍາດດຳເນີນທຸລະກິດ, ຂອບເຂດການດຳເນີນທຸລະກິດ, ທຶນຈົດທະບຽນ ແລະ ຜູ້ຕາງໜ້າຂອງບໍລິສັດ.
4. ຝ່າຍ ກ ຮັບປະກັນການປະຕິບັດຢ່າງເຂັ້ມງວດຄຳແນະນຳ, ລະບຽບ ແລະ ເງື່ອນໄຂຂອງຝ່າຍ ຂ ກ່ຽວກັບການນຳໃຊ້ບັນຊີ ແລະ ວິທີການຊື້-ຂາຍຫຼັກຊັບ.

**<u>ມາດຕາ 22</u>: ການປະຕິບັດກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ**

ຝ່າຍ ກ ແລະ ຝ່າຍ ຂ ຕ້ອງປະຕິບັດຕາມກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

**<u>ມາດຕາ 23</u>: ຜົນສັກສິດຂອງສັນຍາ**

ສັນຍາສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ທຸກໆ ການປັບປຸງໃນສັນຍາສະບັບນີ້ ຕ້ອງໄດ້ນັບການຕົກລົງເຫັນດີຢ່າງເປັນລາຍລັກອັກສອນຈາກທັງສອງຝ່າຍ. ສັນຍາສະບັບນີ້ ສ້າງຂຶ້ນເປັນ 2 ສະບັບ, ແຕ່ລະຝ່າຍຮັກສາໄວ້ ຝ່າຍລະ 1 ສະບັບ ແຕ່ລະສະບັບມີຄຸນຄ່າທາງກົດໝາຍເທົ່າທຽມກັນ.

| | |
|---|---|
| <u>ຕາງໜ້າຝ່າຍ ກ</u> | <u>ຕາງໜ້າຝ່າຍ ຂ</u> |
| (ລູກຄ້າ) | (ຕາງໜ້າບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ) |
| (ຊື່ ແລະລາຍເຊັນ) | (ຊື່ ແລະລາຍເຊັນ) |

ເຊັນບ່ອນນີ້ ⇨ _____

| | |
|---|---|
| <u>ພະຍານຄົນທີ 1:</u> | <u>ພະຍານຄົນທີ 2:</u> |
| (ຊື່ ແລະລາຍເຊັນ) | (ຊື່ ແລະລາຍເຊັນ) |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

***********************************

**ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ**
BCEL KT Securities Co.Ltd

# ສັນຍາແຕ່ງຕັ້ງນາຍໜ້າຊື້-ຂາຍຫຼັກຊັບ
## (ສຳລັບນັກລົງທຶນພາຍໃນ ປະເພດນິຕິບຸກຄົນ)

ເລກທີ_____/ທຄຕລ-ກທ/ກຕລ

❑ ບັນຊີຮຸ້ນ ❑ ບັນຊີຮຸ້ນກູ້ ❑ ບັນຊີພັນທະບັດ

ເລກບັນຊີ: | | | | | | |

ສັນຍາສະບັບນີ້ ໄດ້ຮັບການສ້າງຂຶ້ນໃນວັນທີ ____/____/202___ ທີ່ສຳນັກງານ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ລະຫວ່າງ:

**ຝ່າຍ ກ: ລູກຄ້າ**

ຊື່ນິຕິບຸກຄົນ_____;

ຊື່ຜູ້ອຳນວຍການ:_____ໃບທະບຽນວິສາຫະກິດເລກທີ:_____ອອກໃຫ້ທີ່:_____;

ລົງວັນທີ:_____ໝົດອາຍຸ:_____;ທີ່ຢູ່ປະຈຸບັນ: _____;

ໂທລະສັບຕັ້ງໂຕະ_____ ໂທລະສັບມືຖື: _____ທີ່ຢູ່ອີເມວ ເພື່ອນຳໃຊ້ຕິດຕໍ່ຊື້-ຂາຍຫຼັກຊັບ _____.

ບັນຊີທະນາຄານເລກທີ: LAK_____USD_____

THB_____CNY_____

**ແລະ**

**ຝ່າຍ ຂ: ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ**

ສຳນັກງານໃຫຍ່ຕັ້ງຢູ່: ຊັ້ນ 1 ອາຄານ A1, ຖະໜົນຈົງລ້ຽວ, ເຂດເສດຖະກິດພິເສດບຶງທາດຫຼວງ, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ: (85621) 265477, www.bcel kt.com ,ໃບອະນຸຍາດສ້າງຕັ້ງເລກທີ: 11/ຄຄຊ, ລົງວັນທີ 11 ກັນຍາ 2024;

ຊື່ ແລະ ນາມສະກຸນຜູ້ຕາງໜ້າທີ່ໄດ້ຮັບມອບສິດ: **ທ່ານ ນ. ແສງລາວີ ວົງສາວັນທອງ** ຕຳແໜ່ງ: ຫົວໜ້າພະແນກຊື້-ຂາຍຫຼັກຊັບ ຕາມໃບມອບສິດເລກທີ _____/_____. ລົງວັນທີ_____/____/ 202__.

ທັງສອງຝ່າຍ ໄດ້ຕົກລົງເຊັນສັນຍາຮ່ວມກັນ ໂດຍມີເງື່ອນໄຂດັ່ງລຸ່ມນີ້:

**ມາດຕາ 1: ຈຸດປະສົງຂອງສັນຍາ**

ສັນຍາສະບັບນີ້ສ້າງຂຶ້ນເພື່ອກຳນົດສິດ ແລະ ພັນທະຂອງຄູ່ສັນຍາ, ຫຼັກການ ແລະ ເງື່ອນໄຂໃນການສົ່ງ- ຮັບຄຳສັ່ງຊື້-ຂາຍຫຼັກຊັບ, ການສະສາງ-ຊຳລະລະຫວ່າງຝ່າຍ ກ ແລະ ຝ່າຍ ຂ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດຄຳສັ່ງຊື້-ຂາຍ ໃຫ້ມີປະສິດທິພາບ ແລະ ປົກປ້ອງສິດຜົນປະ�โຫຍດຂອງທັງສອງຝ່າຍ.

**ມາດຕາ 2: ເງື່ອນໄຂຂອງສັນຍາ**

ຝ່າຍ ກ ຕົກລົງແຕ່ງຕັ້ງ ແລະ ມອບສິດ ໃຫ້ຝ່າຍ ຂ ເປັນຕົວແທນ ແລະ ເປັນນາຍໜ້າໃຫ້ແກ່ຝ່າຍ ກ ໃນການຊື້-ຂາຍຫຼັກຊັບ ໂດຍຖືສັນຍາສະບັບນີ້ ເປັນໜັງສືມອບສິດໃຫ້ເຮັດທຸລະກຳຕາມສັນຍາສະບັບນີ້ ແລະ ຝ່າຍ ກ ຕົກລົງຈ່າຍຄ່າບໍລິການໃຫ້ແກ່ຝ່າຍ ຂ ຕາມລະບຽບການ.

ການມອບສິດ ຕາມວັກ 1 ຂອງມາດຕານີ້ ແມ່ນລວມເຖິງການມອບສິດໃຫ້ຝ່າຍ ຂ ເກັບຮັກສາ, ໂອນ, ຮັບໂອນ, ສົ່ງມອບ, ຮັບມອບ, ຖອນ ແລະ ແກ້ໄຂເງິນປັນຜົນ ຫຼື ຜົນປະ�โຫຍດອື່ນໆ ກ່ຽວກັບຫຼັກຊັບໃຫ້ແກ່ຝ່າຍ ຂ. ນອກຈາກນີ້ ການມອບສິດແມ່ນລວມເຖິງການຈອງຊື້ ຫຼື ໃຊ້ສິດໃນຫຼັກຊັບໃດໆ ໃຫ້ກັບຝ່າຍ ກ ຕາມສິດທີ່ຝ່າຍ ກ ມີຢູ່ໃນກໍລະນີທີ່ຝ່າຍ ຂ ພິຈາລະນາແລ້ວເຫັນວ່າເປັນການເຮັດເພື່ອຜົນປະ�โຫຍດຂອງຝ່າຍ ກ; ການຊຳລະຄ່າຊື້ຫຼັກຊັບ, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍອື່ນໆ ກ່ຽວກັບການຊື້-ຂາຍຫຼັກຊັບ. ການທີ່ຝ່າຍ ຂ ເຮັດທຸລະກຳໃດໆ ໃຫ້ແກ່ ຫຼື ແທນຝ່າຍ ກ ຕາມສັນຍາສະບັບນີ້ ຝ່າຍ ກ ຍອມຮັບໃຫ້ມີຜົນເທົ່າກັບເປັນການເຮັດດ້ວຍຕົນເອງ ໂດຍຝ່າຍ ກ ຈະບໍ່ປະຕິເສດຄວາມຮັບຜິດຊອບ ແລະ ຈະບໍ່ໂຕ້ແຍ້ງ ຫຼື ຄັດຄ້ານ.

**ມາດຕາ 3: ຮູບແບບການຊື້-ຂາຍຫຼັກຊັບ**

ການຊື້-ຂາຍຫຼັກຊັບ ມີສອງຮູບແບບຄື: (1) ການຊື້-ຂາຍຫຼັກຊັບທາງກົງ ແລະ (2) ການຊື້-ຂາຍຫຼັກຊັບທາງອ້ອມ.

**ມາດຕາ 4: ການຊື້-ຂາຍຫຼັກຊັບທາງກົງ**

ການຊື້-ຂາຍຫຼັກຊັບທາງກົງ ແມ່ນການຊື້-ຂາຍຫຼັກຊັບ ທີ່ຝ່າຍ ກ ອອກຄຳສັ່ງຊື້-ຂາຍຫຼັກຊັບໃຫ້ແກ່ ຝ່າຍ ຂ ຢ່າງ ເປັນລາຍລັກອັກສອນໂດຍການປະກອບແບບຟອມໃບຄຳສັ່ງຊື້-ຂາຍຕາມການກຳນົດຂອງຝ່າຍ ຂ.

**ມາດຕາ 5: ການຊື້-ຂາຍຫຼັກຊັບທາງອ້ອມ**

ການຊື້-ຂາຍຫຼັກຊັບທາງອ້ອມ ແມ່ນການຊື້-ຂາຍຫຼັກຊັບ ທີ່ຝ່າຍ ກ ອອກຄຳສັ່ງຊື້-ຂາຍຫຼັກຊັບໃຫ້ຝ່າຍ ຂ ໂດຍຜ່ານການນຳໃຊ້ເຄື່ອງມືເຕັກນິກສື່ສານ ເຊັ່ນ: ໂທລະສັບ, ອິນເຕີເນັດ ແລະ ເຄື່ອງມືຊື່ສານອື່ນໆ ຕາມການກຳນົດຂອງຝ່າຍ ຂ.

**ມາດຕາ 6: ຂັ້ນຕອນການສົ່ງ ຮັບຄຳສັ່ງຊື້-ຂາຍຫຼັກຊັບທາງກົງ**

1. ຝ່າຍ ກ ທີ່ມີຈຸດປະສົງຊື້-ຂາຍຫຼັກຊັບທາງກົງ ຕ້ອງຕື່ມຂໍ້ມູນໃສ່ແບບຟອມໃບຄຳສັ່ງຊື້-ຂາຍໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມການກຳນົດຂອງ ຝ່າຍ ຂ. ພາຍຫຼັງຕື່ມຂໍ້ມູນໃສ່ແບບຟອມໃບຄຳສັ່ງສຳເລັດແລ້ວ ຝ່າຍ ກ ຕ້ອງສົ່ງໃຫ້ຝ່າຍ ຂ ເພື່ອປ້ອນຂໍ້ມູນເຫຼົ່ານັ້ນ ໃສ່ລະບົບຊື້-ຂາຍຂອງຕະຫຼາດ;
2. ພະນັກງານຂອງຝ່າຍ ຂ ຈະກວດກາເບິ່ງຄວາມຖືກຕ້ອງຂອງແບບຟອມຄຳສັ່ງຂອງຝ່າຍ ກ ແລະ ເຊັນຢັ້ງຢືນ;
3. ອີງຕາມສັນຍາສະບັບນີ້ ແບບຟອມໃບຄຳສັ່ງທີ່ມີລາຍເຊັນທັງສອງຝ່າຍ ຖືວ່າມີຜົນບັງຄັບໃຊ້;
4. ຝ່າຍ ກ ສາມາດຊື້-ຂາຍຫຼັກຊັບທາງກົງ ໂດຍການມອບສິດຢ່າງເປັນລາຍລັກອັກສອນໃຫ້ຝ່າຍ ຂ ຫຼື ບຸກຄົນທີສາມ. ໃນກໍລະນີນີ້ ລາຍເຊັນຂອງຜູ້ໄດ້ຮັບມອບສິດຈາກຝ່າຍ ກ ຢູ່ໃນແບບຟອມຄຳສັ່ງ ຖືວ່າເປັນຄຳສັ່ງຊື້-ຂາຍ ຂອງຝ່າຍ ກ.



ເຊັນບ່ອນນີ້ ⇨ _____

**ມາດຕາ 7: ຂັ້ນຕອນການສົ່ງ ຮັບຄຳສັ່ງຊື້-ຂາຍຫຼັກຊັບທາງອ້ອມ**

1. ຝ່າຍ ກ ທີ່ມີຈຸດປະສົງຊື້-ຂາຍຫຼັກຊັບທາງອ້ອມ ຕ້ອງສະເໜີຄຳສັ່ງຊື້-ຂາຍຫຼັກຊັບຂອງຕົນຜ່ານທາງໂທລະສັບ, ອິນເຕີເນັດ ແລະ ວິທີການອື່ນໆ ຕາມການກຳນົດຂອງຝ່າຍ ຂ.
2. ພະນັກງານ/ລະບົບຂອງຝ່າຍ ຂ ຈະປະຕິບັດຄຳສັ່ງຂອງຝ່າຍ ກ ພາຍຫຼັງພະນັກງານຂອງຝ່າຍ ຂ ໄດ້ຮັບຂໍ້ມູນຈາກຝ່າຍ ກ ທີ່ເຫັນວ່າຖືກຕ້ອງ;
3. ການຊື້-ຂາຍຫຼັກຊັບທາງອ້ອມ ໂດຍຜ່ານທາງໂທລະສັບ, ອິນເຕີເນັດ ແລະ ວິທີການອື່ນໆ ຕາມການກຳນົດຂອງຝ່າຍ ຂ ແລະ ຝ່າຍ ກ ຕົກລົງມອບສິດໃຫ້ພະນັກງານຂອງຝ່າຍ ຂ ປະຕິບັດຄຳສັ່ງຊື້-ຂາຍ ແລະ ລົງລາຍເຊັນໃບແບບຟອມຄຳສັ່ງຕາມການມອບໝາຍຂອງຝ່າຍ ກ ແລະ ຝ່າຍ ກ ຍອມຮັບຜົນການຊື້-ຂາຍຫຼັກຊັບທັງໝົດທີ່ເກີດຈາກການມອບສິດດັ່ງກ່າວ ໃນທຸກກໍລະນີ.

**ມາດຕາ 8: ການບັນທຶກຄຳສັ່ງຊື້-ຂາຍຫຼັກຊັບ**

ໃນເວລາຮັບຄຳສັ່ງຊື້-ຂາຍຫຼັກຊັບຈາກຝ່າຍ ກ, ຝ່າຍ ຂ ຕ້ອງບັນທຶກຢ່າງເປັນລາຍລັກອັກສອນ ຫຼື ບັກທຶກສຽງ ແລະ ວິທີການອື່ນໆ ເພື່ອນຳໃຊ້ເປັນສິ່ງຢັ້ງຢືນຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ. ການບັນທຶກດັ່ງກ່າວ ຝ່າຍ ຂ ຕ້ອງເກັບຮັກສາໄວ້ເປັນເວລາ 5 ປີ.

**ມາດຕາ 9: ຜົນສັກສິດຂອງຄຳສັ່ງຊື້-ຂາຍຫຼັກຊັບ**

ທຸກຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ ລວມທັງຄຳສັ່ງດ້ວຍວາຈາ ຫຼື ເປັນລາຍລັກອັກສອນ ຫຼື ທາງໂທລະສັບ, ອິນເຕີເນັດ ແລະ ດ້ວຍວິທີການອື່ນໆ ຕາມການກຳນົດຂອງຝ່າຍ ຂ ພາຍ ຫຼັງຝ່າຍ ຂ ໄດ້ຮັບຊາບຄຳສັ່ງນັ້ນຢ່າງຊັດເຈນ ປັດສະຈາກຂໍ້ສົງໃສແລ້ວຖືວ່າເປັນຄຳສັ່ງທີ່ຖືກຕ້ອງຂອງຝ່າຍ ກ ແລະ ໃນທຸລະກຳນີ້ ຝ່າຍ ກ ຕ້ອງຍອມຮັບຜົນຂອງຄຳສັ່ງດັ່ງກ່າວເໝືອນກັບວ່າຝ່າຍ ກ ໄດ້ເຮັດທຸລະກຳນັ້ນດ້ວຍຕົນເອງທຸກປະການ.

**ມາດຕາ 10: ການແຈ້ງຜົນການຊື້-ຂາຍຫຼັກຊັບ**

ຝ່າຍ ຂ ຕ້ອງແຈ້ງຜົນການຊື້-ຂາຍຫຼັກຊັບໃຫ້ແກ່ຝ່າຍ ກ ຫຼື ຜູ້ຕາງໜ້າຊາບພາຍຫຼັງການຈັບຄູ່ຊື້-ຂາຍສຳເລັດ ຊຶ່ງລວມມີຂໍ້ມູນດັ່ງນີ້: (1) ລາຄາ, ຈຳນວນ, ວັນທີຊຳລະ, ຄ່າທຳນຽມນາຍໜ້າ ແລະ ອື່ນໆ ໂດຍຜ່ານທາງໄປສະນີ, ໂທລະສັບ, ອິນເຕີເນັດ ແລະ ຜ່ານເຄື່ອງມືສື່ສານອື່ນໆ ຕາມການກຳນົດຂອງຝ່າຍ ຂ. ໃນກໍລະນີຝ່າຍ ກ ບໍ່ຕ້ອງການຂໍ້ມູນທີ່ລະບຸໄວ້ໃນມາດຕານີ້ ຝ່າຍ ຂ ບໍ່ມີພັນທະແຈ້ງໃຫ້ຝ່າຍ ກ ຊາບ.

**ມາດຕາ 11: ການຍົກເລີກ ຫຼືປ່ຽນແປງຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ**

ການຍົກເລີກ ຫຼື ປ່ຽນແປງຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ ທັງໝົດ ຫຼື ບາງສ່ວນ ຝ່າຍ ກ ຕ້ອງແຈ້ງໃຫ້ຝ່າຍ ຂ ຊາບກ່ອນຄຳສັ່ງຊື້-ຂາຍຂອງຝ່າຍ ກ ຖືກຈັດຕັ້ງປະຕິບັດສຳເລັດ. ການຍົກເລີກ ຫຼື ປ່ຽນແປງຄຳສັ່ງດັ່ງກ່າວ ຈະມີຜົນສັກສິດກໍຕໍ່ເມື່ອຝ່າຍ ກ ໄດ້ຮັບແຈ້ງຢືນຢັນຈາກຝ່າຍ ຂ ເທົ່ານັ້ນ. ການຍົກເລີກ ຫຼື ການປ່ຽນແປງດັ່ງກ່າວ ຈະບໍ່ມີຜົນກະທົບ ຕໍ່ທຸລະກຳຕ່າງໆ ທີ່ຝ່າຍ ຂ ໄດ້ປະຕິບັດກ່ອນການຍົກເລີກ ຫຼື ປ່ຽນແປງຄຳສັ່ງຊື້-ຂາຍໄດ້ຮັບການຢືນຢັນ.

**ມາດຕາ 12: ການຊຳລະເງິນໃນການຊື້-ຂາຍຫຼັກຊັບ**

1. ຝ່າຍ ກ ຕ້ອງມີບັນຊີເງິນຝາກຢູ່ທະນາຄານຕົວແທນຂອງຝ່າຍ ຂ ເພື່ອຮອງຮັບການຊຳລະຊື້-ຂາຍຫຼັກຊັບ. ບັນຊີເງິນຝາກດັ່ງກ່າວ ຕ້ອງແມ່ນບັນຊີເງິນຝາກກະແສລາຍວັນ ຫຼື ບັນຊີເງິນຝາກປະຢັດ ຫຼື ບັນຊີປະເພດອື່ນໆ ຕາມການກຳນົດຂອງ ສຳນັກງານ ຄຄຊ.
2. ກໍລະນີຝ່າຍ ກ ສົ່ງຄຳສັ່ງຊື້ຫຼັກຊັບຜ່ານຝ່າຍ ຂ, ຝ່າຍ ກ ຕ້ອງໂອນເງິນໃຫ້ຄົບຖ້ວນຕາມມູນຄ່າຫຼັກຊັບທີ່ຝ່າຍ ກ ສັ່ງຊື້ເຂົ້າບັນຊີເງິນຝາກຂອງຝ່າຍ ຂ (ບັນຊີເພື່ອລູກຄ້າ) ກ່ອນສົ່ງຄຳສັ່ງຊື້. ໃນກໍລະນີ ຄຳສັ່ງຊື້ຂອງຝ່າຍ ກ ບໍ່ປະສົບຜົນສຳເລັດທັງໝົດ ຫຼື ບາງສ່ວນ ແລະ ຝ່າຍ ກ ຕ້ອງການຖອນເງິນສ່ວນທີ່ເຫຼືອຄືນ ແມ່ນໃຫ້ຝ່າຍ ກ ໄປພົວພັນກັບທະນາຄານຕົວແທນຂອງຝ່າຍ ຂ ດ້ວຍຕົນເອງເລີຍ.
3. ກໍລະນີຝ່າຍ ກ ສົ່ງຄຳສັ່ງຂາຍຫຼັກຊັບຜ່ານຝ່າຍ ຂ ຖ້າວ່າຄຳສັ່ງດັ່ງກ່າວສຳເລັດ ເງິນທີ່ໄດ້ຈາກການຂາຍຈະຖືກໂອນເຂົ້າບັນຊີເງິນຝາກຂອງຝ່າຍ ຂ (ບັນຊີເພື່ອລູກຄ້າ) ພາຍໃນເວລາ T+2. ຖ້າຝ່າຍ ກ ຕ້ອງການຖອນເງິນດັ່ງກ່າວ ໃຫ້ຝ່າຍ ກ ໄປພົວພັນກັບທະນາຄານຕົວແທນຂອງຝ່າຍ ຂ ດ້ວຍຕົນເອງເລີຍ.
4. ຝ່າຍ ກ ຕົກລົງແຕ່ງຕັ້ງ ແລະ ມອບໝາຍສິດໃຫ້ຝ່າຍ ຂ ໃນການເບີກຖອນ ຫຼື ອາຍັດເງິນໃນບັນຊີຂອງຝ່າຍ ກ ເພື່ອຊຳລະໜີ້ສິນຕ່າງໆ ທີ່ຝ່າຍ ກ ມີຕໍ່ຝ່າຍ ຂ ໂດຍບໍ່ມີເງື່ອນໄຂ ແລະ ຂໍ້ໂຕ້ແຍ້ງໃດໆ ໃນກໍລະນີ ຝ່າຍ ກ ໄດ້ສັ່ງໃຫ້ຝ່າຍ ຂ ເຮັດທຸລະກຳເພື່ອຜົນປະໂຫຍດຂອງຝ່າຍ ກ ຕາມລະບຽບຂອງຝ່າຍ ຂ.
5. ໃນກໍລະນີຝ່າຍ ກ ເສຍຊີວິດ ຫຼື ກາຍເປັນຄົນບໍ່ມີຄວາມສາມາດ ຫຼື ຄ້ອຍຄືບໍ່ມີຄວາມສາມາດ ຫຼື ຖືກຮ້ອງຟ້ອງດຳເນີນຄະດີ ຫຼື ກໍລະນີອື່ນໆ ເມື່ອຝ່າຍ ຂ ເຫັນເປັນການສົມຄວນເພື່ອປົກປ້ອງຜົນປະໂຫຍດຂອງຝ່າຍ ຂ, ຝ່າຍ ກ ຕົກລົງ ແລະ ຍິນຍອມໃຫ້ຝ່າຍ ຂ ຂາຍຫຼັກຊັບ ຫຼື ຊັບສິນ ຫຼື ສິດອື່ນໆ ຂອງຝ່າຍ ກ ທີ່ຢູ່ໃນການຄອບຄອງ ຂອງຝ່າຍ ຂ ທັງໝົດ ຫຼື ບາງສ່ວນໄດ້ທັນທີ ເພື່ອຊຳລະໜີ້ຄ້າງຊຳລະທີ່ຝ່າຍ ກ ມີຕໍ່ຝ່າຍ ຂ ແລະ ຊື້ຫຼັກຊັບທັງໝົດ ຫຼື ບາງສ່ວນເພື່ອທົດແທນຫຼັກຊັບທີ່ຝ່າຍ ກ ໄດ້ສັ່ງໃຫ້ຝ່າຍ ຂ ຂາຍໄປແລ້ວ ແຕ່ຝ່າຍ ກ ຍັງບໍ່ທັນໄດ້ສົ່ງມອບຫຼັກຊັບໃຫ້ຝ່າຍ ຂ. ນອກຈາກນີ້ ຝ່າຍ ຂ ສາມາດຕັດສິນປົດບັນຊີຂອງຝ່າຍ ກ.

**ມາດຕາ 13: ການສົ່ງ ມອບຫຼັກຊັບ**

ເມື່ອມີການຊື້-ຂາຍຫຼັກຊັບ ຕ້ອງສົ່ງມອບຫຼັກຊັບດັ່ງນີ້:

1. ໃນກໍລະນີຝ່າຍ ກ ໄດ້ສົ່ງຄຳສັ່ງຊື້ຫຼັກຊັບ ໂດຍຜ່ານຝ່າຍ ຂ ແລ້ວຄຳສັ່ງດັ່ງກ່າວປະສົບຜົນສຳເລັດ, ຝ່າຍ ກ ຈະໄດ້ຮັບຫຼັກຊັບເຂົ້າບັນຊີຫຼັກຊັບຂອງຕົນ ພາຍໃນວັນທີ່ມີການຊຳລະຄ່າຊື້ຫຼັກຊັບດັ່ງກ່າວ (T+2).
2. ໃນກໍລະນີ ຝ່າຍ ຂ ໂອນຫຼັກຊັບຜ່ານບັນຊີຝາກຫຼັກຊັບທີ່ສູນຮັບຝາກຫຼັກຊັບໃຫ້ຝ່າຍ ກ ຫຼື ຝ່າຍ ຂ ໄດ້ເກັບຮັກສາຫຼັກຊັບທີ່ຝ່າຍ ກ ມອບໝາຍໃຫ້ຊື້ ແລະ ເກັບໄວ້ກັບຝ່າຍ ຂ ຕາມຄຳສັ່ງຂອງຝ່າຍ ກ ໃຫ້ຖືວ່າຝ່າຍ ຂ ໄດ້ສົ່ງມອບຫຼັກຊັບໃຫ້ແກ່ຝ່າຍ ກ ຕາມລະບຽບການແລ້ວ.
3. ໃນກໍລະນີ ຝ່າຍ ກ ສັ່ງຂາຍຫຼັກຊັບຜ່ານຝ່າຍ ຂ, ຫຼັກຊັບຂອງຝ່າຍ ຂ ຈະຖືກໂອນໄປໃຫ້ບັນຊີຂອງຜູ້ຊື້ ພາຍໃນວັນ ແລະ ເວລາທີ່ຕະຫຼາດຫຼັກຊັບ ຫຼື ຝ່າຍ ຂ ກຳນົດ. ໃນກໍລະນີຝ່າຍ ກ ໂອນຫຼັກຊັບຜ່ານບັນຊີຝາກຫຼັກຊັບທີ່ສູນຮັບຝາກຫຼັກຊັບຈັດໄວ້ເພື່ອການຝາກ ຖອນ ຫຼື ໂອນຫຼັກຊັບໃຫ້ແກ່ຝ່າຍ ຂ ຫຼື ຝ່າຍ ກ ໄດ້ມີຄຳສັ່ງໃຫ້ຝ່າຍ ຂ ສົ່ງມອບຫຼັກຊັບຈາກຫຼັກຊັບຂອງຝ່າຍ ກ ທີ່ເກັບຮັກສາໄວ້ກັບຝ່າຍ ຂ ນັ້ນ ໃຫ້ຖືວ່າຝ່າຍ ກ ໄດ້ສົ່ງມອບຫຼັກຊັບໃຫ້ຝ່າຍ ຂ ຕາມລະບຽບການແລ້ວ.
4. ໃນກໍລະນີຝ່າຍ ກ ມີຫຼັກຊັບເກັບຮັກສາໄວ້ກັບຝ່າຍ ຂ (ໝາຍເຖິງຫຼັກຊັບຂອງຝ່າຍ ກ ທີ່ຝ່າຍ ຂ ນຳໄປຝາກໄວ້ກັບສູນຮັບຝາກຫຼັກຊັບ) ຝ່າຍ ກ ຍິນຍອມໃຫ້ຝ່າຍ ຂ ສາມາດນຳຫຼັກຊັບທີ່ເກັບຮັກສາໄວ້ນັ້ນມາສົ່ງມອບໄດ້).

**ມາດຕາ 14: ສິດ ຂອງຝ່າຍ ກ**

ອີງຕາມສັນຍາສະບັບນີ້ ຝ່າຍ ກ ມີສິດ ດັ່ງນີ້:

1. ສົ່ງຄຳສັ່ງຊື້-ຂາຍຫຼັກຊັບໂດຍຜ່ານ ຝ່າຍ ຂ;
2. ຮັບໃບແຈ້ງຜົນການເຄື່ອນໄຫວບັນຊີຫຼັກຊັບ ແລະ ຍອດເງິນໃນບັນຊີຫຼັກຊັບຈາກຝ່າຍ ຂ ເມື່ອຕ້ອງການ;
3. ມີສິດຊື້-ຂາຍຫຼັກຊັບ ໂດຍສອດຄ່ອງກັບດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ;
4. ຝ່າຍ ກ ຕ້ອງຮັບຮູ້ລະບຽບການທີ່ກ່ຽວຂ້ອງຕ່າງໆ ລວມເຖິງຂໍ້ກຳນົດ ແລະ ເງື່ອນໄຂໃນການຊື້-ຂາຍຫຼັກຊັບຂອງບໍລິສັດ ແລະ ຮັບຊາບວ່າເປັນໜ້າທີ່ຂອງຝ່າຍ ກ ຕ້ອງທຳຄວາມເຂົ້າໃຈ ແລະ ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງຕ່າງໆ, ຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ທີ່ບໍລິສັດຈະປະກາດໃຊ້ໃນຕໍ່ໜ້າ; ປະຕິບັດຢ່າງຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
5. ຂໍຜົນການວິເຄາະ ແລະ ຂໍ້ມູນທີ່ປະຕິບັດໂດຍຜະແນກວິເຄາະຫຼັກຊັບຂອງຝ່າຍ ຂ ຕາມຄວາມອາດສາມາດຂອງ ຝ່າຍ ຂ;
6. ມີສິດທວງຖາມຜັນທະຕ່າງໆທີ່ຝ່າຍ ຂ ມີຕໍ່ຝ່າຍ ກ.



ເຊັນບ່ອນນີ້ ⇨ _____

**<u>ມາດຕາ 15</u>: ພັນທະຂອງຝ່າຍ ກ**

ອີງຕາມສັນຍາສະບັບນີ້ ຝ່າຍ ກ ມີພັນທະຕໍ່ຝ່າຍ ຂ ດັ່ງນີ້:

1. ສະໜອງຂໍ້ມູນທີ່ຖືກຕ້ອງ ແລະ ຄົບຖ້ວນໃຫ້ແກ່ຝ່າຍ ຂ. ໃນກໍລະນີຝ່າຍ ກ ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ຄົບຖ້ວນ ຝ່າຍ ກ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງດັ່ງກ່າວ;
2. ຝ່າຍ ກ ຕ້ອງມີບັນຊີເງິນຝາກຢູ່ທະນາຄານຕົວແທນຂອງຝ່າຍ ຂ ເພື່ອຮອງຮັບການຊຳລະການຊື້-ຂາຍຫຼັກຊັບ. ບັນຊີເງິນຝາກດັ່ງກ່າວ ຕ້ອງແມ່ນບັນຊີເງິນຝາກກະແສລາຍວັນ ຫຼື ບັນຊີເງິນຝາກປະຢັດ ຫຼື ບັນຊີເງິນຝາກປະເພດ ອື່ນໆ ຕາມການກຳນົດຂອງສຳນັກງານ ຄລຕ ໃນແຕ່ລະໄລຍະ;
3. ສະໜອງເອກະສານຕ່າງໆ ທີ່ຈຳເປັນຕາມການສະເໜີຂອງຝ່າຍ ຂ;
4. ຝ່າຍ ກ ຍິນດີມອບສິດ ແລະ ແຕ່ງຕັ້ງໃຫ້ຝ່າຍ ຂ ໃນການດຳເນີນທຸລະກຳຕ່າງໆ ເຊັ່ນ: ການສະເໜີ ຂໍອະນຸຍາດຕ່າງໆ ແລະ ການປະກອບເອກະສານ ເພື່ອອຳນວຍຄວາມສະດວກໃນການຂາຍຮຸ້ນ (ຫຼັກຊັບ) ຂອງຕົນ ໂດຍຝ່າຍ ກ ຍິນດີຮັບຜິດຊອບຈ່າຍຄ່າທຳນຽມຕ່າງໆ ຕາມລະບຽບການ;
5. ຊຳລະຄ່າຫຼັກຊັບຕາມມູນຄ່າທີ່ຝ່າຍ ກ ສົ່ງຄຳສັ່ງຊື້ຜ່ານຝ່າຍ ຂ;
6. ຊຳລະຄ່າທຳນຽມ, ຄ່າບໍລິການຊື້-ຂາຍຫຼັກຊັບ ແລະ ຄ່າບໍລິການອື່ນໆ (ຖ້າມີ) ສຳລັບການບໍລິການທີ່ຝ່າຍ ຂ ສະໜອງໃຫ້;
7. ຮັບປະກັນໃຫ້ມີຫຼັກຊັບພຽງພໍໃນບັນຊີຫຼັກຊັບຂອງຕົນກ່ອນອອກຄຳສັ່ງຂາຍຫຼັກຊັບ ແລະ ມີເງິນໃນບັນຊີທະນາຄານ ພຽງພໍເພື່ອຊຳລະຄ່າຫຼັກຊັບ ແລະ ຄ່າທຳນຽມຕ່າງໆ ທີ່ເກີດຈາກການນຳໃຊ້ບໍລິການຊື້-ຂາຍຫຼັກຊັບທຸກຄັ້ງ;
8. ຍອມຮັບຜົນການຊື້-ຂາຍຫຼັກຊັບທີ່ຝ່າຍ ຂ ໄດ້ປະຕິບັດຕາມສຳສັ່ງຂອງຝ່າຍ ກ;
9. ໃນກໍລະນີຝ່າຍ ກ ເຫັນວ່າມີການສົ່ງຄຳສັ່ງຊື້-ຂາຍຫຼັກຊັບຜິດພາດ ຫຼື ບໍ່ຖືກຕ້ອງ ຝ່າຍ ກ ຕ້ອງແຈ້ງໃຫ້ ຝ່າຍ ຂ ຊາບພາຍໃນວັນທີ່ມີການຊື້-ຂາຍຫຼັກຊັບ ຖ້າບໍ່ດັ່ງນັ້ນ ຝ່າຍ ຂ ຈະຖືວ່າ ຝ່າຍ ກ ຍອມຮັບຄຳສັ່ງຊື້-ຂາຍ ແລະ ຄຳສັ່ງຊື້-ຂາຍດັ່ງກ່າວ ເປັນຄຳສັ່ງຊື້-ຂາຍທີ່ຖືກຕ້ອງ;
10. ຝ່າຍ ກ ຍອມຮັບວ່າ ທຸກການຊື້-ຂາຍຫຼັກຊັບທີ່ເກີດຈາກຄຳສັ່ງຊື້-ຂາຍຂອງລູກຄ້າ ຖືວ່າເປັນການຕັດສິນໃຈຂອງລູກຄ້າທັງໝົດ. ຂໍ້ມູນຂ່າວສານ ຫຼື ການແນະນຳໃດໆ ກ່ຽວກັບການຊື້-ຂາຍຫຼັກຊັບ ຈາກພະນັກງານຄົນໃດຄົນໜຶ່ງຂອງ ຝ່າຍ ຂ ຖືວ່າບໍ່ແມ່ນພາລະຜູກພັນຂອງຝ່າຍ ຂ ແລະ ຝ່າຍ ຂ ບໍ່ມີຄວາມຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ ເວັ້ນແຕ່ເປັນການຈົງໃຈ ຫຼື ຄວາມປະໝາດຂອງຝ່າຍ ຂ ຫຼື ເປັນການຂັດຕໍ່ລະບຽບທີ່ກ່ຽວຂ້ອງ;
11. ຍິນຍອມໃຫ້ຝ່າຍ ຂ ເຂົ້າເປັນສະມາຊິກຂອງສູນຮັບຝາກຫຼັກຊັບຕາມກົດໝາຍ, ດຳລັດ ແລະ ລະບຽບການຕ່າງໆ ກ່ຽວກັບຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຫຼື ຕາມກົດໝາຍອື່ນໆ ໄດ້ປະກາດໃຊ້ ແລະ ໃຊ້ບໍລິການຕ່າງໆ ຂອງສູນຮັບຝາກຫຼັກຊັບດັ່ງກ່າວໃນສ່ວນທີ່ກ່ຽວຂ້ອງກັບຫຼັກຊັບຂອງຝ່າຍ ກ. ຝ່າຍ ກ ເຫັນດີໃຫ້ຝ່າຍ ຂ ປະຕິບັດຕາມຫຼັກການ, ເງື່ອນໄຂ, ວິທີການຕະຫຼອດຮອດແນວທາງປະຕິບັດຂອງສູນຮັບຝາກຫຼັກຊັບໄດ້ທຸກປະການເຊັ່ນ: ຕົກລົງໃຫ້ບໍລິສັດເປີດເຜີຍຊື່, ທີ່ຢູ່ ແລະ ລາຍລະອຽດອື່ນໆ ກ່ຽວກັບຝ່າຍ ກ ເພື່ອໃຫ້ສູນຮັບຝາກຫຼັກຊັບຮັບຊາບ;
12. ຝ່າຍ ກ ຂໍຮັບຮອງວ່າຂໍ້ມູນຕ່າງໆ ທີ່ແຈ້ງໃຫ້ແກ່ຝ່າຍ ຂ ເປັນຂໍ້ມູນທີ່ຖືກຕ້ອງ ແລະ ຄົບຖ້ວນທຸກປະການ.
13. ໃນກໍລະນີຝ່າຍ ກ ມີການປ່ຽນແປງທີ່ຢູ່, ທີ່ຢູ່ອີເມວ, ໝາຍເລກໂທລະສັບ ຫຼື ຂໍ້ມູນທີ່ສຳຄັນອື່ນໆ ທີ່ມີຜົນຕໍ່ການຈັດຕັ້ງປະຕິບັດສັນຍາສະບັບນີ້ ຝ່າຍ ກ ຕ້ອງແຈ້ງໃຫ້ ຝ່າຍ ຂ ຊາບທັນທີ. ຖ້າຂໍ້ມູນໃດທີ່ຝ່າຍ ກ ແຈ້ງໃຫ້ຝ່າຍ ຂ ເປັນຂໍ້ມູນທີ່ບໍ່ຖືກຕ້ອງເຊິ່ງມີຜົນກະທົບດ້ານລົບຕໍ່ສັນຍາສະບັບນີ້ ໃຫ້ໝາຍເຫດ້ານ້ຂອງຝ່າຍ ກ ເຖິງກຳນົດຊຳລະທັນທີ ແລະ ຖືວ່າລູກຄ້າຜິດສັນຍາ;
14. ການແຈ້ງ, ການບອກກ່າວ ຫຼື ການທວງຖາມໃດໆ ທີ່ຝ່າຍ ຂ ໄດ້ເຮັດໜັງສືສົ່ງໄປຍັງສະຖານທີ່ຢູ່ຂອງຝ່າຍ ກ ທີ່ໄດ້ລະບຸໄວ້ ຫຼື ທາງອີເມວຕາມຝ່າຍ ກ ໄດ້ແຈ້ງໄວ້ກັບຝ່າຍ ຂ, ຝ່າຍ ກ ຍິນຍອມໃຫ້ຖືວ່າມີການບອກກ່າວ ຫຼືໄດ້ຮັບແຈ້ງໂດຍຖືກຕ້ອງແລ້ວ ເຖິງວ່າຝ່າຍ ກ ໄດ້ຮັບແຈ້ງດ້ວຍຕົນເອງ ຫຼືຜູ້ອື່ນຮັບໄວ້ແທນກໍຕາມ.

**<u>ມາດຕາ 16</u>: ສິດຂອງຝ່າຍ ຂ**

ອີງຕາມສັນຍາສະບັບນີ້ ຝ່າຍ ຂ ມີສິດປະຕິເສດການປະຕິບັດຄຳສັ່ງຊື້-ຂາຍຫຼັກຊັບຂອງຝ່າຍ ກ ເມື່ອເຫັນວ່າຄຳສັ່ງດັ່ງກ່າວ ເປັນການລະເມີດລະບຽບກົດໝາຍທີ່ກ່ຽວຂ້ອງ ຫຼື ກົດລະບຽບຂອງບໍລິສັດ. ສ່ວນຄ່າເສຍຫາຍທີ່ເກີດຂຶ້ນຈາກຄຳສັ່ງດັ່ງກ່າວ ຝ່າຍ ກ ບໍ່ມີສິດຮຽກຮ້ອງຄ່າເສຍຫາຍຈາກຝ່າຍ ຂ.

**<u>ມາດຕາ 17</u>: ພັນທະຂອງຝ່າຍ ຂ**

ອີງຕາມສັນຍາສະບັບນີ້ ຝ່າຍ ຂ ມີພັນທະຕໍ່ຝ່າຍ ກ ດັ່ງນີ້:

1. ປະຕິບັດຄຳສັ່ງຊື້-ຂາຍທັງໝົດ ທີ່ຝ່າຍ ກ ສະເໜີມາໂດຍສອດຄ່ອງກັບເງື່ອນໄຂ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຮັກສາຄວາມລັບຂອງລູກຄ້າ ເຊັ່ນ: ຫຼັກຊັບ ແລະ ເງິນໃນບັນຊີຫຼັກຊັບ, ຂໍ້ມູນການຊື້-ຂາຍຫຼັກຊັບ ຍົກເວັ້ນຕາມການກຳນົດຂອງກົດໝາຍ ຫຼື ລະບຽບການໃນແຕ່ລະໄລຍະ;
3. ແຈ້ງໃຫ້ຝ່າຍ ກ ຊາບກ່ຽວກັບຄວາມຜິດພາດໃນການຢັ້ງຢືນການຊື້-ຂາຍໃຫ້ໄວທີ່ສຸດ (ພາຍໃນມື້ ຫຼື ໃນວັນຕໍ່ມາພາຍຫຼັງການຢັ້ງຢືນຄຳສັ່ງຊື້-ຂາຍທີ່ບໍ່ຖືກຕ້ອງ);
4. ທົດແທນຄ່າເສຍຫາຍຈາກການຊື້-ຂາຍທັງໝົດທີ່ເກີດຈາກຄວາມຜິດພາດຂອງຝ່າຍ ຂ ໃຫ້ແກ່ຝ່າຍ ກ;
5. ລາຍງານຜົນການຊື້-ຂາຍຫຼັກຊັບ (ຖ້າຄຳສັ່ງຊື້-ຂາຍໄດ້ຮັບການຈັບຄູ່ທັງໝົດ ຫຼື ບາງສ່ວນ) ໃຫ້ຝ່າຍ ກ ຊາບຢ່າງເປັນລາຍລັກອັກສອນ ໂດຍສົ່ງໄປຍັງສະຖານທີ່ທີ່ຝ່າຍ ກ ໄດ້ລະບຸໄວ້ ຫຼື ທາງໂທລະສັບ ຫຼື ທາງອີເລັກໂຕຣນິກ ອື່ນໆ ຕາມທີ່ຝ່າຍ ກ ໄດ້ແຈ້ງໄວ້ກັບຝ່າຍ ຂ ຕາມຮູບແບບທີ່ຝ່າຍ ຂ ຫຼື ຕາມກົດລະບຽບກ່ຽວຂ້ອງກຳນົດ. ຖ້າຝ່າຍ ກ ບໍ່ຕ້ອງການລາຍງານດັ່ງກ່າວ ຝ່າຍ ຂ ກໍບໍ່ຈຳເປັນສົ່ງລາຍງານໃຫ້.
6. ຝ່າຍ ຂ ຈະບໍ່ຮັບຜິດຊອບຕໍ່ທຸກການສູນເສຍ ຫຼື ເສຍຫາຍທີ່ເກີດຂຶ້ນ ຍ້ອນກໍລະນີຕ່າງໆດຸ່ມນີ້:
   1) ເກີດຂຶ້ນຈາກການທີ່ຝ່າຍ ຂ ບໍ່ສາມາດປະຕິບັດຄຳສັ່ງຊື້-ຂາຍຂອງຝ່າຍ ກ ໄດ້ທັງໝົດ ຍ້ອນຄຳສັ່ງຊື້-ຂາຍ ຂອງຝ່າຍ ກ ບໍ່ຖືກຈັບຄູ່ຊື້-ຂາຍ;
   2) ເກີດຈາກຄວາມຜິດທີ່ເກີດຈາກບຸກຄົນທີສາມ ຊຶ່ງລວມມີແຕ່ບໍ່ຈຳກັດຄຸ່ຮ່ວມງານຂອງຝ່າຍ ຂ ໃນເວລາສະໜອງການບໍລິການຊື້-ຂາຍຫຼັກຊັບແບບອອນລາຍທາງໄກ;
   3) ເກີດຈາກຄວາມຜິດພາດຂອງລະບົບ IT ແລະ ທາງດ້ານເຕັກນິກໃດໜຶ່ງທີ່ກ່ຽວຂ້ອງ;
   4) ເກີດຈາກຝ່າຍ ຂ ປະຕິບັດຊັກຊ້າ ແລະ ບໍ່ສາມາດປະຕິບັດພາລະໜ້າທີ່ຂອງຕົນຕາມເງື່ອນໄຂ ແລະ ກົດລະບຽບ ຍ້ອນມີຄວາມຜິດພາດຂອງລະບົບ IT, ການຈັດສັນຂໍ້ມູນຂອງລະບົບ ແລະລະບົບການສື່ສານລົ້ມເຫຼວ;
   5) ບໍ່ສາມາດດຳເນີນການຊື້-ຂາຍໄດ້ ຍ້ອນຝ່າຍ ກ ສະໜອງຂໍ້ມູນໃຫ້ຊັກຊ້າ, ບໍ່ຄົບຖ້ວນ ແລະ ບໍ່ຖືກຕ້ອງ ຫຼື ຝ່າຍ ຂ ບໍ່ສາມາດຕິດຕໍ່ຫາຝ່າຍ ກ ໂດຍມີຂໍ້ມູນຢັ້ງຢືນວ່າຝ່າຍ ຂ ໄດ້ພະຍາຍາມຕິດຕໍ່ຜົວພັນຫາຝ່າຍ ກ.
   6) ຄ່າໃຊ້ຈ່າຍໃດໆ ທີ່ເກີດຂຶ້ນອັນເນື່ອງມາຈາກ ຫຼື ທີ່ກ່ຽວກັບສັນຍານີ້ ຫຼື ກ່ຽວກັບການກະທຳ ຫຼື ການຍົກເວັ້ນ ການກະທຳຂອງຝ່າຍ ກ ຫຼື ຕົວແທນຂອງຝ່າຍ ກ ລວມເຖິງບັນດາຄວາມເສຍຫາຍ ແລະ ຄ່າໃຊ້ຈ່າຍໃດໆ ທີ່ ຝ່າຍ ຂ ອາດໄດ້ຮັບອັນເນື່ອງມາຈາກການຮ້ອງຟ້ອງ ຫຼື ຮ້ອງຟ້ອງໂດຍບຸກຄົນອື່ນໃຫ້ຝ່າຍ ຂ ຮັບຜິດຊອບຕໍ່ສັນຍານີ້ ເຊິ່ງບໍ່ໄດ້ເກີດຂຶ້ນຈາກການກະທຳຂອງຝ່າຍ ຂ ແຕ່ປະການໃດ ຍົກເວັ້ນການກະທຳໂດຍຕັ້ງໃຈ ຫຼື ການປະມາດຂອງຝ່າຍ ຂ ຫຼື ຂອງພະນັກງານ ຫຼື ຂອງລູກຈ້າງ.
   7) ຄວາມເສຍຫາຍທີ່ເກີດຈາກອັກຄີໄຟ, ພະຍຸ, ການນັດຢຸດງານ, ການກໍ່ຄວາມບໍ່ສະຫງົບ, ການປະທ້ວງ, ສົງຄາມ, ການເຂົ້າຄວບຄຸມໂດຍອຳນາດລັດ, ຂໍ້ຜິດພາດໃນການຈັດສົ່ງຂໍ້ມູນ, ຂໍ້ຜິດພາດກ່ຽວກັບລະບົບເຄືອຂ່າຍການສື່ສານ ຫຼື ຄວາມຊັກຊ້າອັນເນື່ອງມາຈາກເຄືອຄ່າຍການສື່ສານຂອງບຸກຄົນພາຍນອກ ຫຼື ເຄືອຂ່າຍ ການສື່ສານຂອງລັດ, ອຸປະກອນເຄື່ອງໃຊ້ຂັດຂ້ອງ, ກະແສໄຟຟ້າຂັດຂ້ອງ ຫຼື ເຫດສຸດວິໄສທີ່ມີຜົນກະທົບຕໍ່ການດຳເນີນງານຂອງຝ່າຍ ຂ. ເຫດການດັ່ງກ່າວ ຕ້ອງບໍ່ເກີດຈາກຄວາມຕ້ອງໃຈ ຫຼື ຄວາມປະມາດຂອງຝ່າຍ ຂ ຫຼື ພະນັກງານ ຫຼື ລູກຈ້າງຂອງຝ່າຍ ຂ.

**<u>ມາດຕາ 18</u>: ຮູບການ ແລະອົງການແກ້ໄຂຂໍ້ຂັດແຍ່ງ**

ທຸກໆ ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນສັນຍາສະບັບນີ້ ຕ້ອງແກ້ໄຂໂດຍສັນຕິວິທີ ແລະ ສະເໝີພາບ. ໃນກໍລະນີຂໍ້ຂັດແຍ່ງທີ່ເກີດຂຶ້ນບໍ່ສາມາດແກ້ໄຂໄດ້ ທັງສອງຝ່າຍສາມາດສົ່ງຂໍ້ຂັດແຍ່ງດັ່ງກ່າວໄປໃຫ້ຕົວແທນທີ່ເປັນກຳມະການ ຫຼື ສົ່ງໄປທີ່ສຳນັກງານແກ້ໄຂຂໍ້ຂັດແຍ່ງ ເພື່ອແກ້ໄຂຕາມກົດໝາຍຂອງ ສປປ ລາວ.



ເຊັນບ່ອນນີ້ ⇨ _____

**<u>ມາດຕາ 19</u>: ການແຈ້ງກ່ຽວກັບການປ່ຽນແປງຂໍ້ມູນຂອງຝ່າຍ ກ**

ທຸກການປ່ຽນແປງຂໍ້ມູນ ຝ່າຍ ກ ຕ້ອງແຈ້ງໃຫ້ຝ່າຍ ຂ ຊາບ ແລະ ຈະຕ້ອງມອບສິ່ງດ້ວຍມື ຫຼື ສົ່ງທາງໄປສະນີລົງທະບຽນ, ອີເມວໄປຫາຫ້ອງການຈົດທະບຽນຂອງຝ່າຍສັນຍາທີ່ກ່ຽວຂ້ອງ.

**<u>ມາດຕາ 20</u>: ການຍົກເລີກການປະຕິບັດສັນຍາ**

ສັນຍາສະບັບນີ້ ຈະໄດ້ຮັບການຍົກເລີກໃນກໍລະນີດັ່ງຕໍ່ໄປນີ້:

1. ໄດ້ຮັບການເຫັນດີຢ່າງເປັນລາຍລັກອັກສອນຈາກທັງສອງຝ່າຍ;
2. ກໍລະນີຝ່າຍ ກ ສູນເສຍສິດທາງແພ່ງ ຫຼື ຝ່າຍ ຂ ສູນເສຍສະຖານະພາບດ້ານກົດໝາຍໃນການເປັນນິຕິບຸກຄົນເຊັ່ນ: ຍຸດເຊົາກິດຈະການ, ລົ້ມລະລາຍ ແລະ ອື່ນໆ.
3. ຝ່າຍໃດຝ່າຍໜຶ່ງບໍ່ສາມາດສືບຕໍ່ປະຕິບັດສັນຍາສະບັບນີ້ ເນື່ອງຈາກເຫດສຸດວິໄສ;
4. ຝ່າຍໃດຝ່າຍໜຶ່ງລະເມີດເງື່ອນໄຂໃນສັນຍາສະບັບນີ້ ແລະ ການຮັກສາສັນຍາສະບັບນີ້ ສ້າງຄວາມເສຍຫາຍຢ່າງຮ້າຍແຮງຕໍ່ຄູ່ສັນຍາ.

ຫາກຄູ່ສັນຍາຝ່າຍໃດຝ່າຍໜຶ່ງມີຈຸດປະສົງຍົກເລີກສັນຍາຕ້ອງແຈ້ງໃຫ້ຄູ່ສັນຍາຮັບຊາບຢ່າງເປັນລາຍລັກອັກສອນຊາບກ່ອນ 7 ວັນ. ການຍົກເລີກສັນຍານີ້ ບໍ່ກະທົບຕໍ່ສິດ ແລະ ໜ້າທີ່ຂອງຄູ່ສັນຍາທີ່ມີກ່ອນການຍົກເລີກສັນຍາສະບັບນີ້.

**<u>ມາດຕາ 21</u>: ໝາຍເຫດ**

1. ເມື່ອລົງລາຍເຊັນໃນສັນຍານີ້ແລ້ວ ຝ່າຍ ກ ຮັບຮູ້ວ່າລາຄາຂອງຫຼັກຊັບມີການເໜັງຕີງຂຶ້ນ ຫຼື ລົງຢູ່ສະເໝີ. ໃນບາງກໍລະນີຫຼັກຊັບອາດສູນເສຍຄຸນຄ່າທັງໝົດ. ຝ່າຍ ກ ຍອມຮັບວ່າ ການຊື້-ຂາຍຫຼັກຊັບມີຄວາມສ່ຽງ.
2. ເມື່ອລົງລາຍເຊັນໃນສັນຍານີ້ແລ້ວ ຝ່າຍ ກ ຮັບຮູ້ວ່າການສົ່ງຄຳສັ່ງຊື້-ຂາຍຫຼັກຊັບຜ່ານລະບົບອິນເຕີເນັດ ແລະ ໂທລະສັບ ມີຄວາມສ່ຽງຊຶ່ງອາດເກີດຈາກຄວາມຜິດພາດຂອງລະບົບ ແລະ ບຸກຄົນທີສາມ. ຝ່າຍ ກ ພ້ອມທີ່ຈະຮັບຄວາມສ່ຽງ ແລະ ການສູນເສຍທີ່ອາດເກີດຂຶ້ນຈາກການສົ່ງຄຳສັ່ງປະເພດນີ້ ເນື່ອງຈາກຄວາມຜິດພາດຂອງລະບົບ, ຂອງບຸກຄົນທີສາມ ແລະ ຈາກການກະທຳຂອງຝ່າຍ ກ ຊຶ່ງມີຜົນກະທົບຕໍ່ການເຄື່ອນໄຫວຊື້-ຂາຍຫຼັກຊັບ ຫຼື ການນຳໃຊ້ບັນຊີຊື້-ຂາຍຫຼັກຊັບຂອງຝ່າຍ ກ.
3. ເມື່ອລົງລາຍເຊັນໃນສັນຍານີ້ແລ້ວ ຝ່າຍ ກ ຮັບຮູ້ວ່າ ຝ່າຍ ຂ ໄດ້ແຈ້ງຕໍ່ຝ່າຍ ກ ຮັບຊາບ ກ່ຽວກັບໜ້າທີ່, ໃບອະນຸຍາດດຳເນີນທຸລະກິດ, ຂອບເຂດການດຳເນີນທຸລະກິດ, ທຶນຈົດທະບຽນ ແລະ ຜູ້ຕາງໜ້າຂອງບໍລິສັດ.
4. ຝ່າຍ ກ ຮັບປະກັນການປະຕິບັດຢ່າງເຂັ້ມງວດຄຳແນະນຳ, ລະບຽບ ແລະ ເງື່ອນໄຂຂອງຝ່າຍ ຂ ກ່ຽວກັບການນຳໃຊ້ບັນຊີ ແລະ ວິທີການຊື້-ຂາຍຫຼັກຊັບ.

**<u>ມາດຕາ 22</u>: ການປະຕິບັດກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ**

ຝ່າຍ ກ ແລະ ຝ່າຍ ຂ ຕ້ອງປະຕິບັດຕາມກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

**<u>ມາດຕາ 23</u>: ຜົນສັກສິດຂອງສັນຍາ**

ສັນຍາສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ທຸກໆ ການປັບປຸງໃນສັນຍາສະບັບນີ້ ຕ້ອງໄດ້ນັບການຕົກລົງເຫັນດີຢ່າງເປັນລາຍລັກອັກສອນຈາກທັງສອງຝ່າຍ. ສັນຍາສະບັບນີ້ ສ້າງຂຶ້ນເປັນ 2 ສະບັບ, ແຕ່ລະຝ່າຍຮັກສາໄວ້ ຝ່າຍລະ 1 ສະບັບ ແຕ່ລະສະບັບມີຄຸນຄ່າທາງກົດໝາຍເທົ່າທຽມກັນ.

| | |
|---|---|
| <u>ຕາງໜ້າຝ່າຍ ກ</u> | <u>ຕາງໜ້າຝ່າຍ ຂ</u> |
| (ລູກຄ້າ) | (ຕາງໜ້າບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ) |
| (ຊື່ ແລະລາຍເຊັນ) | (ຊື່ ແລະລາຍເຊັນ) |

ເຊັນບ່ອນນີ້ ⇨ _____

| | |
|---|---|
| <u>ພະຍານຄົນທີ 1:</u> | <u>ພະຍານຄົນທີ 2:</u> |
| (ຊື່ ແລະລາຍເຊັນ) | (ຊື່ ແລະລາຍເຊັນ) |